ລາຍສັບປະດາ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16-22 ມັງກອນ 2023
ປີທີ 12
ສະບັບທີ 905

## ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ພົບປະກັບນາຍົກລັດຖະມົນຕີ ແຫ່ງ ສສ.ຫວຽດນາມ



(ສພຊ) ວັນທີ 11 ມັງກອນ 2023, ທີ່ສະພາແຫ່ງຊາດ, ສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ພົບປະກັບສະຫາຍ ຟ້າມ ມິງ ຈິ່ງ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ນາຍົກລັດຖະມົນຕີ ແຫ່ງ ສສ.ຫວຽດນາມ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ສປປລາວ ຢ່າງເປັນທາງການ, ເຂົ້າຮ່ວມກອງປະຊຸມຄະນະກຳມະການຮ່ວມມືທະວິພາຄີ ລະຫວ່າງ ລັດຖະບານລາວ ແລະ ຫວຽດນາມ ຄັ້ງທີ 45 ແລະ ເຂົ້າຮ່ວມພິທີສະຫຼຸບປີສາມັກຄີມິດຕະພາບລາວ-ຫວຽດນາມ, ຫວຽດນາມ-ລາວ ປີ 2022.

ໃນໂອກາດນີ້, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການຢ້ຽມຢາມຂອງສະຫາຍ ຟ້າມ ມິງ ຈິ່ງ ແລະ ຄະນະ ເຊິ່ງຖືເປັນການນຳເອົາໄມຕີຈິດມິດຕະພາບອັນດູດດື່ມ ແລະ ຄວາມສາມັກຄີຮັກແພງອັນສະໜິດສະໜົມຖານສະຫາຍອ້າຍນ້ອງຂອງພັກ, ລັດຖະບານ, ສະພາແຫ່ງຊາດ ແລະ ປະຊາຊົນ ຫວຽດນາມອ້າຍນ້ອງ ມາຍັງພັກ, ລັດຖະບານ, ສະພາແຫ່ງຊາດ ແລະ ປະຊາຊົນລາວບັນດາເຜົ່າ ໃນທ່າມກາງບັນຍາກາດສະຫຼຸບການສະເຫຼີມສະຫຼອງ ປີສາມັກຄີມິດຕະພາບລາວ-ຫວຽດນາມ, ຫວຽດນາມ-ລາວ ປີ 2022 ກໍຄືວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລະຫວ່າງ ລາວ-ຫວຽດນາມ ຄົບຮອບ 45 ປີ. ພ້ອມດຽວກັນນີ້, ກໍໄດ້ແຈ້ງຜົນສຳເລັດຂອງກອງປະຊຸມສະໄໝ

ອ່ານຕໍ່ໜ້າ 2

## ສປນວ ໄຂກອງປະຊຸມສະໄໝສາມັນເທື່ອທີ 4



(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີ II ໄຂຂຶ້ນຢ່າງເປັນທາງການໃນຕອນເຊົ້າວັນທີ 11 ມັງກອນ 2023 ທີ່ອົງການປົກຄອງນະຄອນຫລວງວຽງຈັນ (ນວ) ໂດຍເປັນປະທານຂອງທ່ານ ອານຸພາບ ຕຸນາລົມ ປະທານສະພາປະຊາຊົນນະຄອນຫລວງວຽງຈັນ, ເປັນກຽດເຂົ້າຮ່ວມຂອງທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ທ່ານ ອາດສະພັງທອງ ສີພັນດອນ ເຈົ້າຄອງ ນວ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ນວ, ສະມາຊິກສະພາປະຊາຊົນນະຄອນລວງວຽງຈັນ (ສສ ນວ) ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໃນໂອກາດນີ້, ທ່ານ

ອ່ານຕໍ່ໜ້າ 4

## ກອງປະຊຸມຄົບຄະນະກຳມາທິການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ



(ສພຊ) ເພື່ອສະຫຼຸບ, ຕີລາຄາການເຄື່ອນໄຫວວຽກງານໃນປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານໃນປີ 2023 ຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ຊຸດທີ IX; ເພື່ອຮັບຟັງການປະກອບຄຳຄິດຄຳເຫັນ, ຄຳສະເໜີ, ຄວາມສົນໃຈຂອງກຳມະການ, ຕົວແທນຂະແໜງການທີ່ກ່ຽວຂ້ອງ, ແຂກຖືກເຊີນເຂົ້າຮ່ວມກອງປະຊຸມ ແລະ ສ້າງຄວາມເປັນເອກະພາບ ທັນເປັນມະຕິຂອງກອງປະຊຸມຄົບຄະນະກຳມາທິການ ທັງເພື່ອຮັບຮອງເອົາມະຕິຂອງກອງປະຊຸມຄົບຄະນະຂອງກຳມາທິການ ປະຈຳປີ 2022.

ກອງປະຊຸມຄົບຄະນະຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະຈຳປີ 2022 ໄດ້ຈັດຂຶ້ນທີ່ສະພາແຫ່ງຊາດ ໃນວັນທີ 9 ມັງກອນ 2023 ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ຜູ້ຊີ້ນຳກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ທ່ານ ພົຕ. ປອ. ວົງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ເຂົ້າຮ່ວມມີບັນດາປະທານ-ຮອງປະທານກຳມາທິການຕ່າງໆ, ຄະນະເລຂາທິການພາຍໃນສະພາແຫ່ງຊາດ, ຄະນະກຳມະການທີ່ສັງກັດກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 17 ເຂດເລືອກຕັ້ງ ພ້ອມດ້ວຍແຂກຖືກເຊີນ.

ກອງປະຊຸມຄັ້ງນີ້, ໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບ, ຕີລາຄາການເຄື່ອນໄຫວວຽກງານໃນປີ 2022 ຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປີ 2023 ຂອງກຳມາທິການປ້ອງກັນຊາດ-

ອ່ານຕໍ່ໜ້າ 4

## ຝຶກອົບຮົມວຽກງານກອດກາ ແລະ ວຽກງານການກຳນົດຕຳແໜ່ງງານ



(ສພຊ) ເພື່ອຍົກສູງບົດບາດ, ໜ້າທີ່ຮັບຜິດຊອບ, ຄວາມຮູ້ ແລະ ຄວາມສາມາດ ໃຫ້ລັດຖະກອນຄະນະເລຂາທິການສະພາແຫ່ງຊາດ, ແນໃສ່ປັບປຸງຄຸນນະພາບການເຄື່ອນໄຫວວຽກງານ

ອ່ານຕໍ່ໜ້າ 4



### ກອງປະຊຸມຄະນະປະຈຳ ສພຊ (ສາມັນ) ຄັ້ງທີ 8

ອ່ານຕໍ່ໜ້າ 4



### ການເຄື່ອນໄຫວວຽກງານ ຂອງປະທານຄະນະ ສສຊ ສາລະວັນ

ອ່ານຕໍ່ໜ້າ 4



### ຕ້ອນຮັບຄະນະຜູ້ແທນ ສະພາປະຊາຊົນແຂວງ ສ.ເກົາຫຼີ

ອ່ານຕໍ່ໜ້າ 4

## ປະທານ...

(ຕໍ່ຈາກໜ້າ 1)

ສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຫາກໍປິດລົງໃນທ້າຍເດືອນທັນວາ 2022 ຜ່ານມາ ແລະ ໄດ້ຕີລາຄາສູງຕໍ່ຜົນສຳເລັດການພົບປະລະຫວ່າງ ສອງນາຍົກລັດຖະມົນຕີ ລາວ-ຫວຽດນາມ ທີ່ໄດ້ທົບທວນຕີລາຄາຄືນການພົວພັນທາງດ້ານການເມືອງ-ຄວາມໝັ້ນຄົງ, ເສດຖະກິດ, ການຄ້າ-ການລົງທຶນ, ການສຶກສາ, ສາທາລະນະສຸກ, ທ່ອງທ່ຽວ ແລະ ອື່ນໆ ພ້ອມທັງການກຳນົດທິດທາງແຜນການຮ່ວມມືໃນຕໍ່ໜ້າ ແລະ ໄດ້ມີການສະຫຼຸບຕີລາຄາການສະເຫຼີມສະຫຼອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ, ຫວຽດນາມ-ລາວ ປີ 2022 ທີ່ມີຫຼາຍກິດຈະກຳສະເຫຼີມສະຫຼອງທີ່ໄດ້ຈັດຂຶ້ນ ທັງຢູ່ສູນກາງ ແລະ ທ້ອງຖິ່ນ. ໃນໂອກາດດັ່ງກ່າວ, ສະຫາຍ ປະທານສະພາແຫ່ງຊາດ ໄຊສົມພອນ ພົມວິຫານ ໄດ້ຝາກຄວາມຢື້ຢາມຖາມຂ່າວອັນອົບອຸ່ນ ແລະ ອວຍພອນໄຊອັນປະເສີດ ເຖິງບັນດາການນຳຂັ້ນສູງຂອງ ສສ.ຫວຽດນາມ ພ້ອມທັງໄດ້ຕີລາຄາສູງ ແລະ ຊົມເຊີຍຢ່າງສຸດໃຈ ຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງຮອບດ້ານ ແລະ ໜ້າຊື່ນຊົມ ທີ່ປະຊາຊົນຫວຽດນາມອ້າຍນ້ອງຍາດມາໄດ້ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງພັກກອມມູນິດຫວຽດນາມ ໃນການສ້າງສາ ແລະ ພັດທະນາປະເທດຊາດ, ພ້ອມທັງໄດ້ຕາງໜ້າໃຫ້ພັກ, ສະພາແຫ່ງຊາດ, ລັດຖະບານ ແລະ ປະຊາຊົນລາວບັນດາເຜົ່າ ສະແດງຄວາມຮູ້ບຸນຄຸນເປັນຢ່າງສູງ ແລະ ຂອບໃຈຢ່າງຈິງໃຈມາຍັງ ພັກ, ສະພາແຫ່ງຊາດ, ລັດຖະບານ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອອັນໃຫຍ່ຫຼວງ, ລ້ຳຄ່າ ແລະ ທັນການ ແບບເຂົ້າເນັດທັກ, ຜັກເສັ້ນແບ່ງ ໃຫ້ແກ່ປະຊາຊົນລາວ ບໍ່ວ່າໃນພາລະກິດຕໍ່ສູ້ກູ້ຊາດໃນເມື່ອກ່ອນ ກໍຄືພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປັດຈຸບັນ.

ພ້ອມນັ້ນ, ສະຫາຍ ຟ້າມ ມິງ ຈິ໋ງ ໄດ້ສະແດງຄວາມຂອບໃຈ ຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ສະແດງຄວາມພາກພູມໃຈ ທີ່ໄດ້ເດີນທາງມາຢ້ຽມຢາມ ສປປລາວ ຢ່າງເປັນທາງການ ໃນຄັ້ງນີ້, ພ້ອມທັງໄດ້ແຈ້ງໃຫ້ຊາບເຖິງຈຸດປະສົງຂອງການຢ້ຽມຢາມຄັ້ງນີ້ ກໍຄືການເຂົ້າຮ່ວມພິທີສະຫຼຸບປີສາມັກຄີມິດຕະພາບ ລາວ-ຫວຽດນາມ, ຫວຽດນາມ-ລາວ ປີ 2022 ອັນມີຄວາມໝາຍຄວາມສຳຄັນຂອງສອງປະເທດ, ເຂົ້າຮ່ວມກອງປະຊຸມຄະນະກຳມະການຮ່ວມມືທະວິພາຄີລະ ຫວ່າງ ລັດຖະບານ ແຫ່ງ ສປປລາວ ແລະ ລັດຖະບານ ແຫ່ງ ສສ.ຫວຽດນາມ ຄັ້ງທີ 45, ຕິດຕາມການຜັນຂະຫຍາຍບັນດາໜ້າວຽກທີ່ ກອງປະຊຸມສອງກົມການເມືອງ ລາວ-ຫວຽດນາມ ໄດ້ຕົກລົງຮ່ວມກັນໃນທ້າຍປີ 2022 ຜ່ານມາ, ທັງຍັງເປັນການສະແດງຄວາມຊົມເຊີຍຕໍ່ສະຫາຍ ສອນໄຊ ສີພັນດອນ ທີ່ໄດ້ຮັບເລືອກຕັ້ງໃຫ້ດຳລົງຕຳແໜ່ງເປັນນາຍົກລັດຖະມົນຕີ ແຫ່ງ ສປປລາວ ໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 30 ທັນວາ 2022 ຜ່ານມາ; ພ້ອມດຽວກັນນັ້ນ, ກໍໄດ້ນຳເອົາຄວາມຢ້ຽມຢາມຖາມຂ່າວ ແລະ ຄຳອວຍພອນປີໃໝ່ ຈາກການນຳຂັ້ນສູງຂອງ ສສ.ຫວຽດນາມ ເຖິງການນຳຂັ້ນສູງຂອງ ພັກ-ລັດ ແລະ ປະຊາຊົນລາວບັນດາເຜົ່າ.

ໃນການພົບປະ, ສອງຝ່າຍ ໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ທີ່ນັບມື້ເຂົ້າສູ່ລວງເລິກ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ ເຊິ່ງສະແດງອອກໃນການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນການນຳຂັ້ນສູງ, ການເຂົ້າຮ່ວມກອງປະຊຸມພົບປະຂັ້ນສູງຂອງສອງພັກ ກໍຄື ສອງລັດຖະບານ, ການພົວພັນຮ່ວມມື ແລະ ຊ່ວຍເຫຼືອເຊິ່ງກັນແລະກັນ ລະຫວ່າງ ທ້ອງຖິ່ນຂອງສອງປະເທດ ກໍດຳເນີນໄປເປັນປົກກະຕິ, ການຮ່ວມມືທາງດ້ານເສດຖະກິດ-ການຄ້າ ກໍໄດ້ມີການຂະຫຍາຍຕົວເພີ່ມຂຶ້ນ. ການພົວພັນຮ່ວມມື ລະຫວ່າງ ສອງສະພາແຫ່ງຊາດ ລາວ ແລະ ຫວຽດນາມ ໃນໄລຍະຜ່ານມາ ແມ່ນໄດ້ຮັບການເສີມຂະຫຍາຍຂຶ້ນຢ່າງຕໍ່ເນື່ອງ ເຊິ່ງໄດ້ນຳເອົາຜົນປະໂຫຍດຕົວຈິງມາສູ່ສອງອົງການນິຕິບັນຍັດ ໂດຍສະເພາະໃນປີສາມັກຄີມິດຕະພາບ ລາວ-ຫວຽດນາມ ປີ 2022 ນີ້ ສອງສະພາແຫ່ງຊາດ ລາວ-ຫວຽດນາມ ໄດ້ຮ່ວມກັນຈັດຫຼາຍກິດຈະກຳສະເຫຼີມສະຫຼອງ ເປັນຕົ້ນແມ່ນການແລກປ່ຽນຢ້ຽມຢາມຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆ, ໄດ້ລົງນາມບົດບັນທຶກ ວ່າດ້ວຍການຮ່ວມມື ລະຫວ່າງສອງອົງການນິຕິບັນຍັດ 3 ສະບັບ, ຈັດຕັ້ງກອງປະຊຸມສຳມະນາແລກປ່ຽນບົດຮຽນ, ຈັດກອງປະຊຸມປາຖະກະຖາເລົ່າມູນເຊື້ອສາຍພົວພັນຮ່ວມມື ລາວ-ຫວຽດນາມ ແລະ ວີດີໂອສັ້ນເຜີຍແຜ່ມູນເຊື້ອ, ຈັດການແຂ່ງຂັນຂີ່ລົດຖີບ, ແລກປ່ຽນກິລາ-ສິລະປະ, ຈັດຫ້ອງຮຽນພາສາຫວຽດນາມ ແລະ ອື່ນໆ ພ້ອມທັງໄດ້ມີການຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ໂອກາດດຽວກັນນີ້, ສະຫາຍ ຟ້າມ ມິງ ຈິ໋ງ ຍັງໄດ້ຊຸກຍູ້ໃຫ້ສອງສະພາແຫ່ງຊາດລາວ ແລະ ຫວຽດນາມ ມີການເພີ່ມທະວີການພົວພັນຮ່ວມມືກັນຫຼາຍຂຶ້ນ ໂດຍສະເພາະການແລກປ່ຽນບົດຮຽນດ້ານນິຕິບັນຍັດ ໃນການຕິດຕາມກວດກາອົງການອຳນາດລັດສູງສຸດຂອງປະເທດ, ຊຸກຍູ້ໃຫ້ສອງສະພາແຫ່ງຊາດໃນນາມທີ່ເປັນອົງການອຳນາດລັດສູງສຸດ ຮ່ວມກັນຕິດຕາມກວດກາບັນດາໂຄງການຮ່ວມມືຂອງສອງປະເທດ, ຊຸກຍູ້ໃຫ້ມີການພົວພັນຮ່ວມມືໃນຂອບຫຼາຍຝ່າຍຂອງສະພາແຫ່ງຊາດ ໂດຍສະເພາະ ສປປລາວ ຈະເປັນເຈົ້າພາບຈັດກອງປະຊຸມສຸດຍອດລັດຖະສະພາ 3 ປະເທດ CLV ໃນປີ 2023 ແລະ ສືບຕໍ່ເປັນເຈົ້າພາບຈັດກອງປະຊຸມໃຫຍ່ໄອປາ (AIPA) ຄັ້ງທີ 45 ໃນປີ 2024.



ໃນຕອນທ້າຍ, ສະຫາຍ ໄຊສົມພອນ ພົມວິຫານ ຍັງໄດ້ອວຍພອນໄຊອັນປະເສີດແດ່ສະຫາຍ ຟ້າມ ມິງ ຈິ໋ງ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ນາຍົກລັດຖະມົນຕີ ແຫ່ງ ສສ.ຫວຽດນາມ ພ້ອມດ້ວຍຄະນະ ໃນໂອກາດປີໃໝ່ 2023 ແລະ ບຸນປີໃຫມ່ຫວຽດນາມ ທີ່ຈະມາເຖິງນີ້, ຈົ່ງມີສຸຂະພະລານາໄມທີ່ສົມບູນ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດອັນໃຫຍ່ຫຼວງ ໃນໜ້າທີ່ວຽກງານອັນມີກຽດຂອງສະຫາຍ ແລະ ປະສົບຜົນສຳເລັດຢ່າງຈົບງາມ ໃນການຢ້ຽມຢາມ ສປປລາວ ຢ່າງເປັນທາງການ ໃນຄັ້ງນີ້.

(ກົງທະນູຄຳ ພົພັດເສລີ)

---

## ເລື່ອງເດັ່ນ ຂ່າວເດັດ

\# ຄັດໂດຍ: ທອມສະນິດ

*☐ ປີ 2022 ມີນັກທ່ອງທ່ຽວເຂົ້າມາຢ້ຽມຢາມ ແລະ ທ່ອງທ່ຽວ ຢູ່ນະຄອນຫລວງວຽງຈັນ ຈຳນວນ 663.528 ເທື່ອຄົນ ເປັນນັກທ່ອງທ່ຽວພາຍໃນ 29.802 ເທື່ອຄົນ ສາມາດສ້າງລາຍຮັບທົ່ວສັງຄົມຈາກການທ່ອງທ່ຽວ ໄດ້ 145.652.870 ໂດລາ.*

***ນສພ. ວຽງຈັນໃໝ່ 09/01/2023***

*☐ ມະຫະກຳບຸນຊ້າງໄຊຍະບູລີ ປີ 2023 ຈະຈັດຂຶ້ນໃນລະຫວ່າງວັນທີ 13-20 ກຸມພາ 2023 ເຊິ່ງໃນລະຫວ່າງວັນທີ 15-16 ກຸມພາ 2023 ຈະເປັນພິທີຊ້ອມໃຫຍ່, ວັນທີ 17 ຈະມີພິທີເຮັດບຸນໃສ່ບາດອຸທິດກຸສົນໃຫ້ຊ້າງ ແລະ ວັນທີ 18-20 ກຸມພາ ແມ່ນພິທີເປີດງານຢ່າງເປັນທາງການ ເຊິ່ງຈະມີຊ້າງຫຼາຍກວ່າ 70 ເຊືອກເຂົ້າຮ່ວມ.*

***ນສພ. ປະເທດລາວ 09/01/2023***

*☐ ສູນຂ່າວສານການແພດສຸຂະສຶກສາ ກະຊວງສາທາລະນະສຸກ ໄດ້ໃຫ້ຮູ້ວ່າ: ໃນໄລຍະ 1 ປີຜ່ານມາ (ເລີ່ມແຕ່ວັນທີ 1 ມັງກອນ ເຖິງ 31 ທັນວາ 2022) ທົ່ວປະເທດ ມີຜູ້ຕິດເຊື້ອພະຍາດໄຂ້ຍຸງລາຍສະສົມ 32.364 ຄົນ, ເສຍຊີວິດສະສົມ 24 ຄົນ, ໃນນັ້ນຕິດເຊື້ອຫຼາຍກວ່າໝູ່ແມ່ນນະຄອນຫຼວງວຽງຈັນ 15.358 ຄົນ, ເສຍຊີວິດ 6 ຄົນ, ແຂວງຫຼວງນ້ຳທາ 4.899 ຄົນ, ເສຍຊີວິດ 5 ຄົນ, ແຂວງຫຼວງພະບາງ 1.759 ຄົນ ບໍ່ມີຄົນເສຍຊີວິດ, ແຂວງອັດຕະປື 1.601 ຄົນ, ເສຍຊີວິດ 6 ຄົນ.*

***ນສພ. ປະຊາຊົນ 09/01/2023***

*☐ ເດືອນທັນວາ 2022 ປກສ ນະຄອນຫລວງວຽງຈັນ ສາມາດແກ້ໄຂຄະດີຢາເສບຕິດໄດ້ 70 ເລື່ອງ ກັກຕົວຜູ້ຕ້ອງຫາ 120 ຄົນ ຍິງ 17 ຄົນ ພ້ອມຂອງກາງຢາບ້າ 312.070 ເມັດ, ຢາໄອສ໌ 6 ກິໂລ 16,1 ກຣາມ, ຢາເຄຕາມີນ 15.353 ກຣາມ ແລະ ຍັງມີຄະດີສືບຕໍ່ດຳເນີນອີກ 490 ເລື່ອງ ຜູ້ຕ້ອງຫາ 679 ຄົນ ຍິງ 88 ຄົນ ຄົນຕ່າງປະເທດ 13 ຄົນ ຂອງກາງຢາບ້າ 6.493.093 ເມັດ, ຢາໄອສ໌ 414,29 ກິໂລ 479,02 ກຣາມ, ກັບ 64 ຖົງນ້ອຍ, ເຮໂຣອີນ 75 ກິໂລ 4,19 ກຣາມ ຝິ່ນ 192.071 ກິໂລ , ຢາເຄຕາມີນ 3,24 ກິໂລ 88.757 ກຣາມ, ເຄມີມຜົງ 2,2 ກິໂລ, ຄັນຊາ 511 ກຣາມ, ຢາອີ 164 ເມັດ, ຢາເສບຕິດໃນຊອງກາເຟ 8 ຊອງ, ແປ້ງຝຸ່ນສີເຫຼືອງ 2 ກຣາມ, ຜົງສີຂາວ 9 ຫຼອດນ້ອຍ ແລະ 2 ຖົງນ້ອຍ ຊອງແປ້ງຝຸ່ນສີແດງ 64 ແກັດ ເປົາຂາວບັນຈຸຜົງສີຂາວ 11,8 ກິໂລ, ປ່ອງບັນຈຸແປ້ງຜົງຂາວ 19 ປ໋ອງ, ແກ້ວບັນຈຸນ້ຳຢາສີຂຽວ 34 ແກ້ວ, ແກ້ວບັນຈຸນ້ຳຢາສີສົ້ມ 49 ແກ້ວ ແກ້ວບັນຈຸຢາບາລີເບີ 29 ແກ້ວ, ເຄື່ອງຈັກສະແຕນເລດ 2 ເຄື່ອງ, ປືນສັ້ນ 4 ກະບອກ ພ້ອມລູກ 108 ລູກ, ປືນແວງ 3 ກະບອກ ພອ້ມລູກ 10 ລູກ, ປືນແກັບ 1 ກະບອກ ລູກປືນ 9 ມມ 7 ລູກ ລູກປືນ 11 ມມ 50 ລູກ; ນອກນີ້ 1 ເດືອນຜ່ານມາ, ຍັງໄດ້ເອົາໃຈໃສ່ປິ່ນປົວ-ບຳບັດຜູ້ຕິດຢາເສບຕິດ-(ຄົນເຈັບເກົ່າ) 1.428 ຄົນ ຍິງ 63 ຄົນ ແລະ ໄດ້ຮັບຄົນເຈັບເຂົ້າໃໝ່ 163 ຄົນ ຍິງ 6 ຄົນ ໄດ້ປິ່ນປົວດີແລ້ວກັບຄືນສູ່ຄອບຄົວ 154 ຄົນ ຍິງ 4 ຄົນ ປັດຈຸບັນຍັງສືບຕໍ່ປິ່ນປົວຄົນເຈັບ 1.437 ຄົນ ຍິງ 65 ຄົນ.*

***ນສພ. ວຽງຈັນໃໝ່ 10/01/2023***

# ກຳມາທິການວັດທະນະທຳ-ສັງຄົມ ຕັ້ງໜ້າປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ດ້ວຍຄວາມຮັບຜິດຊອບສູງ



(ສພຊ) ໃນວັນທີ 14 ທັນວາ 2022 ທີ່ສະພາແຫ່ງຊາດ, ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ ໄດ້ໃຫ້ສຳພາດແກ່ສື່ມວນຊົນສະພາແຫ່ງຊາດເນື່ອງໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່ານັບແຕ່ກອງປະຊຸມສະໄໝສາມັນເທື່ອທີ 3 ຫາເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX, ກຳມາທິການວັດທະນະທຳ-ສັງຄົມ ສາມາດຍາດໄດ້ຜົນງານທີ່ພົ້ນເດັ່ນຫຼາຍດ້ານ ຄື: ໄດ້ຕັ້ງໜ້າປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ແລະ ສາມາດຍາດໄດ້ຜົນງານທີ່ເປັນພື້ນຖານຫລາຍດ້ານ ດັ່ງນີ້:

**ດ້ານນິຕິບັນຍັດ:** ໄດ້ເອົາໃຈໃສ່ປະສານສົມທົບ ແລະ ເຂົ້າຮ່ວມຄົ້ນຄວ້າປະກອບຄຳຄິດຄຳເຫັນ ໃນການສ້າງ ແລະ ປັບປຸງເນື້ອໃນກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ທີ່ນຳສະເໜີຜ່ານກອງປະຊຸມສະໄໝສາມັນເທື່ອທີ 4 ຈຳນວນ 3 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍພິພິທະພັນ (ສ້າງໃໝ່), ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ (ປັບປຸງ), ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່ (ປັບປຸງ) ເຊິ່ງເປັນກົດໝາຍ 3 ສະບັບ ໃນຈຳນວນທັງໝົດ 12 ສະບັບ ທີ່ນຳເຂົ້າພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX; ພ້ອມກັນນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ຈຳນວນ 36 ທ່ານ ທີ່ເປັນກຳມະການຂອງກຳມາທິການວັດທະນະທຳ-ສັງຄົມ ທີ່ປະຈຳຢູ່ແຕ່ລະເຂດເລືອກຕັ້ງ ກໍໄດ້ເຂົ້າຮ່ວມຄົ້ນຄວ້າສ້າງນິຕິກຳໃຕ້ກົດໝາຍຂອງອົງການປົກຄອງທ້ອງຖິ່ນ ແລະ ໄດ້ພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II ຈຳນວນ 69 ສະບັບ; ພ້ອມທັງໄດ້ໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕິດພັນກັບການລົງພົບປະຜູ້ມີສິດເລືອກຕັ້ງໃນທົ່ວປະເທດ; ສຳລັບນິຕິກຳພາຍໃນກຳມາທິການແມ່ນໄດ້ສຳເລັດການກຳນົດຕຳແໜ່ງງານຂອງກົງຈັກເສນາທິການ ເຊິ່ງປະກອບມີ 2 ກົມ, 6 ພະແນກ ໄດ້ຮັບການຮັບຮອງຈາກກະຊວງພາຍໃນ ແລະ ໄດ້ສຳເລັດການຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຄະນະສະມາຊິກສະພາແຫ່ງຊາດເພດຍິງ ຂອງສະພາແຫ່ງຊາດ ຊຸດທີ IX.

**ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ:** ໄດ້ເອົາໃຈໃສ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ປະກອບຄຳເຫັນໃສ່ບັນຫາສຳຄັນພື້ນຖານຂອງປະເທດຊາດ ໃນຂົງເຂດວັດທະນະທຳ-ສັງຄົມ ໂດຍສະເພາະບັນດາຄາດໝາຍທີ່ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ.

ນັບແຕ່ກອງປະຊຸມສະໄໝສາມັນເທື່ອທີ 3 ມາເຖິງປັດຈຸບັນ ກຳມາທິການວັດທະນະທຳ-ສັງຄົມ ໄດ້ຄົ້ນຄວ້າ ແລະ ນຳສະເໜີ 6 ຫົວຂໍ້ ຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ 1 ຫົວຂໍ້ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຄື: ການຄວບຄຸມການແຜ່ລະບາດຂອງພະຍາດໄຂ້ຍຸງລາຍ; ການແກ້ໄຂ ແລະ ຮັບມືກັບພະຍາດໂຄວິດ-19 ຕິດພັນກັບການເປີດປະເທດ; ບັນຫາທາງສຽງຂອງສັງຄົມຕໍ່ການຂາຍປີ້ລົດໄຟຄວາມໄວສູງແລະການບໍລິການຫ້ອງນ້ຳ, ບ່ອນນັ່ງລໍຖ້າຂອງຜູ້ໂດຍສານ; ການເກັບຄ່າບໍລິການເຂົ້າ-ອອກເມືອງຂອງນັກທ່ອງທ່ຽວຢູ່ດ່ານສາກົນ; ສະພາບການປະລະການຮຽນ ແລະ ການເຂົ້າຮຽນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ສົກຮຽນ 2023-2024 ທີ່ມີຈຳນວນນັກຮຽນ, ນັກສຶກສາຫຼຸດລົງ; ຄວາມຄືບໜ້າໃນການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດວ່າດ້ວຍການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19 ເພື່ອກຽມຄວາມພ້ອມໃນການຕ້ອນຮັບນັກທ່ອງທ່ຽວໃນປີ 2023; ຜົນການຕິດຕາມກວດກາກ່ຽວກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳໃຫ້ປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4; ນອກນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ສັງກັດກຳມາທິການປະຈຳຢູ່ເຂດເລືອກຕັ້ງ ກໍໄດ້ຕັ້ງໜ້າເຂົ້າຮ່ວມຄົ້ນຄວ້າ, ປະກອບຄຳຄິດຄຳເຫັນໃສ່ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນດ້ວຍຄວາມຮັບຜິດຊອບສູງ.

**ດ້ານການຕິດຕາມກວດກາ:** ກຳມາທິການໄດ້ເອົາໃຈໃສ່ຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ບັນດາມະຕິກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເປັນຕົ້ນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນຂົງເຂດວັດທະນະທຳ-ສັງຄົມ ທີ່ກຳນົດໄວ້ໃນມະຕິກອງປະຊຸມສະພາແຫ່ງຊາດ ລວມມີ 43 ຄາດໝາຍ (ຂົງເຂດສຶກສາທິການ ແລະ ກິລາ 15 ຄາດໝາຍ, ສາທາລະນະສຸກ 11 ຄາດໝາຍ, ແຮງງານ ແລະ ສະຫວັດດີການສັງຄົມ 7 ຄາດໝາຍ, ຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ 6 ຄາດໝາຍ, ດ້ານບົດບາດຍິງ-ຊາຍ 4 ຄາດໝາຍ) ເຊິ່ງໃນໜຶ່ງປີຜ່ານມາ ສາມາດບັນລຸ 17 ຄາດໝາຍ, ຍັງບໍ່ບັນລຸ 26 ຄາດໝາຍ ແລະ ມີບາງຄາດໝາຍບໍ່ບັນລຸມາຕໍ່ເນື່ອງກັນເປັນເວລາຫຼາຍປີ. ພ້ອມນັ້ນ, ຍັງໄດ້ຕິດຕາມກວດກາການຄຸ້ມຄອງ ແລະ ນຳໃຊ້ງົບປະມານແຫ່ງລັດ ໃນຂົງເຂດວັດທະນະທຳ-ສັງຄົມ, ລົງຕິດຕາມກວດກາຕົວຈິງກ່ຽວກັບການຄວບຄຸມການແຜ່ລະບາດຂອງພະຍາດໄຂ້ຍຸງລາຍ ແລະ ພະຍາດໂຄວິດ-19; ການບໍລິການລົດໄຟຄວາມໄວສູງ; ການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳໃຫ້ປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ; ສະພາບການປະລະການຮຽນ ແລະ ການເຂົ້າຮຽນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ສົກຮຽນ 2023-2024 ທີ່ມີຈຳນວນນັກຮຽນ, ນັກສຶກສາຫຼຸດລົງ; ການຈັດຕັ້ງປະຕິບັດໂຄງການທົດລອງກ່ຽວກັບການປົກປ້ອງສັງຄົມ (ວຽກອຸດໜູນແມ່ຍິງຖືພາ ແລະ ເດັກກ່ອນໄວຮຽນ); ນອກຈາກນັ້ນ, ຍັງໄດ້ເຂົ້າຮ່ວມກັບຄະນະຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ສິ່ງແວດລ້ອມ ໃນເດືອນທ້າຍປີ 2022 ຢູ່ແຂວງຜົ້ງສາລີ ແລະ ແຂວງເຊກອງ.

ນອກຈາກການເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກຳມາທິການທີ່ກ່າວມາຂ້າງເທິງນັ້ນແລ້ວ ກຳມາທິການ ແລະ ສະມາຊິກສະພາແຫ່ງຊາດ ທີ່ເປັນກຳມະການຂອງກຳມາທິການ ຍັງໄດ້ເຄື່ອນໄຫວລົງພົບປະຜູ້ມີສິດເລືອກຕັ້ງຢູ່ແຕ່ລະເຂດເລືອກຕັ້ງເພື່ອເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II ໄດ້ຮັບຟັງຄຳສະເໜີ ແລະ ຕອບບັນຫາຂໍ້ຂ້ອງໃຈຂອງປະຊາຊົນລາວບັນດາເຜົ່າ; ພ້ອມດຽວກັນນັ້ນ, ກໍໄດ້ນຳເອົາຄຳສະເໜີຂອງປະຊາຊົນຕໍ່ອຳນາດການປົກຄອງທ້ອງຖິ່ນ ແລະ ການນຳຂອງສະພາແຫ່ງຊາດ ເພື່ອພິຈາລະນາບັນຫາຕ່າງໆ ຕາມກົດໝາຍ ແລະ ລະບຽບການ; ຜ່ານການລົງພົບປະກັບຜູ້ມີສິດເລືອກຕັ້ງ ບັນຫາປະຊາຊົນມີຄວາມເປັນຫ່ວງ ແລະ ສະເໜີຫຼາຍແມ່ນ: ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໄດ້ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງພໍ່ແມ່ຜູ້ປົກຄອງ ແລະ ນັກຮຽນ, ນັກສຶກສາ ໂດຍສະເພາະຢູ່ເຂດຊົນນະບົດ, ຫ່າງໄກສອກຫຼີກ ເຮັດໃຫ້ອັດຕາປະລະການຮຽນເພີ່ມຂຶ້ນ ໂດຍການອອກໂຮງຮຽນໄປຊອກຫາວຽກເຮັດງານທຳເພື່ອລ້ຽງຊີບຕົນເອງຊ່ວຍຫຼຸດຜ່ອນພາລະແບກຫາບຂອງພໍ່ແມ່; ບັນຫາຄູອາສາສະໝັກທີ່ສິດສອນມາຫຼາຍປີແຕ່ບໍ່ໄດ້ຮັບການພິຈາລະນາເຂົ້າເປັນລັດຖະກອນຄູ ແລະ ບໍ່ໄດ້ຮັບນະໂຍບາຍທີ່ເໝາະສົມ; ພື້ນຖານໂຄງລ່າງ, ອຸປະກອນການຮຽນ-ການສອນ, ປຶ້ມຕຳລາ, ສິ່ງອຳນວຍຄວາມສະດວກແກ່ການຮຽນ-ການສອນຂອງໂຮງຮຽນລັດ ໂດຍສະເພາະຢູ່ເຂດຊົນນະບົດຫ່າງໄກສອກຫຼີກຍັງບໍ່ພຽງພໍ ແລະ ສິ່ງຜົນກະທົບຕໍ່ຄຸນນະພາບການຮຽນ-ການສອນ; ອັດຕາເບ້ຍລ້ຽງຂອງນັກຮຽນຢູ່ໂຮງຮຽນກິນນອນຊົນເຜົ່າ, ໂຮງຮຽນເຕັກນິກວິຊາຊີບ ທີ່ປະຕິບັດຜ່ານມາແມ່ນ 200.000 ກີບຕໍ່ເດືອນຕໍ່ຄົນ ແມ່ນບໍ່ກຸ້ມກິນໃນສະພາບຄ່າຄອງຊີບທີ່ນັບມື້ສູງຂຶ້ນດັ່ງປະຈຸບັນ; ການບໍລິການດ້ານສາທາລະນະສຸກແກ່ປະຊາຊົນຢູ່ເຂດຊົນນະບົດ, ຫ່າງໄກສອກຫຼີກ, ຊົນເຜົ່າ ເປັນຕົ້ນການສັກວັກຊີນກັນພະຍາດແກ່ເດັກກຸ່ມ 5 ປີ, ການເກີດລູກມີແພດຊ່ວຍ, ການກວດ ແລະ ປິ່ນປົວສຸຂະພາບບໍ່ທັນທົ່ວເຖິງ ແລະ ການນຳໃຊ້ບັດປະກັນສັງຄົມມີຄວາມຫຍຸ້ງຍາກ ບໍ່ສາມາດນຳໃຊ້ໄດ້ໃນທຸກໂຮງໝໍ; ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີຕໍ່ພາລະກິດປະຕິວັດຊາດປະຊາທິປະໄຕຍັງຊັກຊ້າ. ການຄົ້ນຄວ້າພິຈາລະນາບັນຫາຄ່າຄອງຊີບ ເປັນຕົ້ນເງິນເດືອນຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ຄ່າແຮງງານຂັ້ນຕ່ຳຂອງກຳມະກອນບໍ່ທັນຕອບສະໜອງ ແລະ ສອດຄ່ອງກັບສະພາບປະຈຸບັນ ທີ່ມີຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຂອງໂລກ ກໍຄືຢູ່ປະເທດພວກເຮົາ; ປະຊາຊົນ ແລະ ຜູ້ປະກອບການສະເໜີໃຫ້ລັດປະກອບສ່ວນຊ່ວຍສ້າງເສັ້ນທາງເຂົ້າສູ່ສະຖານທີ່ທ່ອງທ່ຽວຢູ່ແຕ່ລະທ້ອງຖິ່ນຕື່ມອີກ ເພື່ອສ້າງເງື່ອນໄຂໃຫ້ປະຊາຊົນມີລາຍຮັບຈາກການທ່ອງທ່ຽວ, ລວມທັງເສັ້ນທາງເຂົ້າສູ່ເຂດການຜະລິດເພື່ອນຳເອົາສິນຄ້າອອກສູ່ຕະຫຼາດ, ເສັ້ນທາງປູຢາງລະຫວ່າງບ້ານຫາເທດສະບານເມືອງ ແລະ ລະຫວ່າງເມືອງຫາເມືອງທີ່ມີການເປ່ເພຊຸດໂຊມຫຼາຍ ແລະ ອື່ນໆ.

ໃນຕອນທ້າຍ, ທ່ານປະທານກຳມາທິການວັດທະນະທຳ-ສັງຄົມ ຍັງໄດ້ມີຄຳເຫັນວ່າ: ທຸກພາກສ່ວນນັບທັງການຈັດຕັ້ງຂອງພັກ-ລັດ, ພາກເອກະຊົນ ຕະຫຼອດຮອດປະຊາຊົນລາວບັນດາເຜົ່າໄດ້ມີຄວາມພະຍາຍາມແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນດ້ວຍຄວາມຮັບຜິດຊອບສູງຕາມພາລະບົດບາດໜ້າທີ່ຂອງຕົນເຮັດໃຫ້ພວກເຮົາສາມາດປະຄັບປະຄອງຄວາມຫຍຸ້ງຍາກດ້ານເສດຖະກິດ, ຊີວິດການເປັນຢູ່ໃຫ້ຄ່ອຍໆດີຂຶ້ນຫຼັງຈາກທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19; ເຖິງຢ່າງໃດກໍຕາມ ໃນນາມເປັນສະມາຊິກສະພາແຫ່ງຊາດ ເຮັດໜ້າທີ່ເປັນຕົວແທນແກ່ປະຊາຊົນລາວບັນດາເຜົ່າ ຂໍສະເໜີມາຍັງອົງການຈັດຕັ້ງພັກ-ລັດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນຂົງເຂດວັດທະນະທຳ-ສັງຄົມ ທີ່ຕິດພັນກັບຊີວິດດ້ານແນວຄິດຈິດໃຈຂອງປະຊາຊົນ ແລະ ຂົງເຂດເສດຖະກິດທີ່ຕິດພັນກັບຊີວິດການເປັນຢູ່ດ້ານວັດຖຸຂອງປະຊາຊົນ ຈົ່ງອອກແຮງໃນການປະຕິບັດພາລະບົດບາດ, ໜ້າທີ່ຂອງຕົນ ແລະ ຊ່ວຍແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃຫ້ທັນເວລາ ໂດຍໃຫ້ມີມາດຕະການ, ກົນໄກ ແລະ ວິທີການຈັດຕັ້ງປະຕິບັດເພື່ອແກ້ໄຂບັນຫາສະເພາະໜ້າ ແລະ ຍາວນານໃຫ້ມີປະສິດທິພາບ ແລະ ປະສິດທິຜົນກວ່າເກົ່າ ແນໃສ່ເຮັດໃຫ້ການພັດທະນາທາງດ້ານວັດຖຸໄປຄຽງຄູ່ກັບການພັດທະນາທາງດ້ານແນວຄິດຈິດໃຈໃຫ້ມີຄວາມສົມດຸນກັນ.

## ສປນວ...

(ຕໍ່ຈາກໜ້າ 1)

ອານຸພາບ ຕຸນາລົມ ໄດ້ກ່າວວ່າ: ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສປນວ ໄດ້ໄຂຂຶ້ນຢ່າງເປັນທາງການໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ ແລະ ທົ່ວປວງຊົນຊາວ ນວ ພວມສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ VII ຂອງອົງຄະນະພັກ ນວ, ໂດຍສະເພາະແມ່ນການຜັນຂະຫຍາຍບັນດາຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ເປັນແຜນການອັນລະອຽດຢູ່ໃນທ້ອງຖິ່ນ ເພື່ອນຳໄປຈັດຕັ້ງປະຕິບັດເຂົ້າສູ່ຊີວິດຕົວຈິງ ຢູ່ໃນຮາກຖານ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງ ນວ; ເຊິ່ງໄລຍະປີ 2022 ຜ່ານມາ ປະເທດເຮົາໄດ້ປະສົບກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນທີ່ສະສົມມາເປັນເວລາຫຼາຍປີ ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ພົບສິ່ງທ້າທາຍໃໝ່ເປັນຕົ້ນອັດຕາແລກປ່ຽນເໜັງຕີງແຮງລາຄານ້ຳມັນເຊື້ອໄຟ ແລະ ລາຄາສິນຄ້າເພີ່ມສູງຂຶ້ນ. ໃນນີ້, ນວ ໃນຖານະເປັນນະຄອນຫຼວງຂອງປະເທດເປັນຕົວເມືອງໃຫຍ່ກວ່າແຂວງອື່ນໆກໍໄດ້ຮັບຜົນກະທົບໂດຍກົງຈາກຂໍ້ຫຍຸ້ງຍາກສິ່ງທ້າທາຍ ໄດ້ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນຊາວ ນວ ພົບຄວາມຝືດເຄືອງ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຜນງົບປະມານປະຈຳປີ 2022 ທີ່ໄດ້ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສປນວ ຊຸດທີ II ມີອຸປະສັກຫຼາຍປະການ ເຖິງຢ່າງໃດກໍຕາມພາຍໃຕ້ການຊີ້ນຳ-ນຳພາຂອງອົງຄະນະພັກ ສປນວ ອົງການປົກຄອງ ທີ່ໄດ້ມີຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດ ແລະ ຜ່ານຜ່າຄວາມຫຍຸ້ງຍາກຢ່າງເປັນເຈົ້າການ ໄດ້ເຮັດໃຫ້ການຈັດຕັ້ງປະຕິບັດບັນດາຄາດໝາຍໃນແຜນພັດທະນາເສດຖະກິດ-ສັງຄົມ ແຜນງົບປະມານປີ 2022 ກໍຄືການປະຕິບັດ 2 ວາລະແຫ່ງຊາດທີ່ສະພາປະຊາຊົນຮັບຮອງເອົານັ້ນ ໄດ້ມີຄວາມຄືບ



ໜ້າດີພໍສົມຄວນ ແລະ ບາງຄາດໝາຍ ທາງດ້ານເສດຖະກິດມະຫາພາກຂອງ ນວ ຈຳນວນໜຶ່ງແມ່ນບັນລຸຄາດໝາຍ ແລະ ມີບາງອັນລື່ນຄາດໝາຍ ການພັດທະນາຂອງ ນວ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງທີ່ໜັກແໜ້ນ ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ ສາມາດປະຄັບປະຄອງເສດຖະກິດບໍ່ໃຫ້ຕົກຢູ່ໃນສະພາບຫຍຸ້ງຍາກກວ່ານີ້ ແລະ ຍັງສາມາດຮັບປະກັນໃຫ້ສະພາບແວດລ້ອມ ແລະ ເງື່ອນໄຂທີ່ເອື້ອອຳນວຍໃຫ້ແກ່ການພັດທະນາ ນວ ໄດ້ກັບເຂົ້າສູ່ສະພາບເກືອບປົກກະຕິ ແລະ ຄ່ອຍໆດີຂຶ້ນເທື່ອລະກ້າວ.

ກອງປະຊຸມຄັ້ງນີ້, ຈະໄດ້ພິຈາລະນາຮັບຮອງເອົາບັນດາເນື້ອໃນທີ່ສຳຄັນເຊັ່ນ: ພິຈາລະນາ ແລະ ຮັບຮອງ ເອົາບົດລາຍງານຂອງທ່ານເຈົ້າຄອງ ນວ ກ່ຽວກັບຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຜນງົບປະມານປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງ ນວ; ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2023 ຂອງອົງການກວດສອບປະຈຳພາກກາງ, ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ 2021 ຂອງ ນວ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງອົງການກວດກາລັດ ນວ; ບົດລາຍງານຜົນການກວດກາຕາມຜົນການກວດສອບປະຈຳປີ 2018 ຮັບຟັງການລາຍງານການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຄື: ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ປະຈຳປີ 2022 ຢູ່ ນວ; ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ປະຈຳປີ 2022; ພິຈາລະນາ ແລະ ຮັບຮອງເອົານິຕິກຳໃຕ້ກົດໝາຍ ຂອງ ນວ 2 ສະບັບ ຄື ຮ່າງຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດມາດຕະການສ້າງ ນວ ສະອາດ (ສ.ສະອາດ) ຮ່າງແຜນຈັດສັນທີ່ດິນ ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຮອບດ້ານຂອງ ນວ; ຄົ້ນຄວ້າ ປະກອບຄຳຄິດຄຳເຫັນໃສ່ຮ່າງລັດຖະບັນຍັດຂອງປະທານປະເທດ 2 ສະບັບຄື ຮ່າງລັດຖະບັນຍັດຂອງປະທານ ປະເທດແຫ່ງ ສປປລາວ ວ່າດ້ວຍນະຄອນຫຼວງ, ຮ່າງລັດຖະບັນຍັດຂອງປະທານປະເທດວ່າດ້ວຍອາກອນຕົວເມືອງ (City Tax), ຮັບຟັງການລາຍງານຂອງອົງການປົກຄອງກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດບັນດານິຕິກຳໃຕ້ກົດໝາຍທີ່ ສປນວ ໄດ້ຮັບຮອງເອົາ 2 ສະບັບ ຄື: ຂໍ້ຕົກລົງວ່າດ້ວຍການສ້າງ ນວ ສີຂຽວ (ສ.ສີຂຽວ) ຂໍ້ຕົກລົງວ່າດ້ວຍ ນວ ສະຫງົບສຸກ (ສ.ສະຫງົບ) (ໃນນັ້ນລວມທັງການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍມາດຕະການຫລຸດຜ່ອນອຸບັດເຫດ ແລະ ການຮັກສາຄວາມປອດໄພຕາມທ້ອງຖະໜົນທົ່ວ ນວ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງອົງການໄອຍະການປະຊາຊົນພາກກາງ ແລະ ອົງການໄອຍະການປະຊາຊົນ ນວ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງສານປະຊາຊົນພາກກາງ ແລະ ສານປະຊາຊົນ ນວ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຂອງ ສປນວ ຊຸດທີ II ຮັບຟັງບົດປະກອບຄຳເຫັນຂອງອົງການແນວລາວສ້າງຊາດ ນວ ຕໍ່ການເຄື່ອນໄຫວວຽກງານຂອງ ສປນວ; ພິຈາລະນາໃຫ້ຄະແນນປະເມີນຜົນຕໍ່ການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ ສປນວ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ.

ພ້ອມນັ້ນ, ຍັງຈະໄດ້ຮັບຟັງການຊີ້ແຈງບາງບັນຫາພົ້ນເດັ່ນທີ່ ສສຊ ແລະ ສສນວຍົກຂຶ້ນ ຫຼື ຊັກຖາມ ຈາກອົງການປົກຄອງ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ພາກສ່ວນກ່ຽວຂ້ອງຕື່ມອີກ .

ກອງປະຊຸມ, ຈະໄດ້ດຳເນີນໄປຈົນເຖິງວັນທີ 19 ມັງກອນ 2023 ຈຶ່ງຈະສຳເລັດ.

(ຂ່າວ: ໄຊໂສພາພອນ ມິ່ງມຸງຄຸນ; ພາບ: ສຸພາວັນທອນສະນິດ)

## ກອງປະຊຸມຄົບຄະນະ...

(ຕໍ່ຈາກໜ້າ 1)

ປ້ອງກັນຄວາມສະຫງົບ ສະເໜີໂດຍທ່ານ ພົວ. ປອ. ມາລາ ວິລະຈິດ ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ພ້ອມນັ້ນ, ຍັງໄດ້ຮັບຟັງການລາຍງານຂອງບັນດາທ່ານຄະນະປະສານງານຈາກກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າແຫ່ງຊາດລາວ ທີ່ໄດ້ລາຍງານກ່ຽວກັບການພັດທະນາເຂດຈຸດສຸມ, ການພັດທະນາໝູ່ບ້ານລຽບຕາມຊາຍແດນຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ບັນຫາປະກົດການຫຍໍ້ທໍ້ເກີດຂຶ້ນໃນສັງຄົມປັດຈຸບັນ ແລະ ມາດຕະການແກ້ໄຂ ແລະ ຍຸດທະສາດພັດທະນາສະຫະພັນນັກຮົບເກົ່າລາວໃນໄລຍະໃໝ່.

ໂອກາດດັ່ງກ່າວ, ຍັງໄດ້ຮັບຟັງບົດລາຍງານຂອງບັນດາທ່ານກຳມະການທີ່ສັງກັດກຳມາທິການ ກ່ຽວກັບຜົນຂອງການຕິດຕາມກວດກາວຽກງານ ໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າ ໃນເຂດເລືອກຕັ້ງຂອງຕົນ ໃນປີ 2022 ຜ່ານມາ ແລະ ທິດທາງຕິດຕາມກວດກາ ໃນປີ 2023; ການປະກອບຄຳຄິດຄຳເຫັນຂອງບັນດາທ່ານກຳມະການ ກໍຄືຜູ້ແທນກອງປະຊຸມ ຕໍ່ບົດລາຍງານຕ່າງໆທີ່ໄດ້ລາຍງານໃນກອງປະຊຸມ ເພື່ອຄວາມເປັນເອກະພາບ ແລະ ຮັບຮອງເອົາມະຕິຂອງກອງປະຊຸມຄົບຄະນະຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ຊຸດທີ IX ປະຈຳປີ 2022.

ໃນຕອນທ້າຍ, ທ່ານ ພົທ. ສຸວອນ ເລືອງບຸນມີ ຍັງໄດ້ມີຄຳເຫັນໂອ້ລົມໃຫ້ທິດຊີ້ນຳຕໍ່ກອງປະຊຸມ ເຊິ່ງທ່ານໄດ້ເນັ້ນໜັກບາງບັນຫາສຳຄັນ ໂດຍສະເພາະແມ່ນວຽກງານທາງດ້ານນິຕິບັນຍັດ, ການຕົກລົງບັນຫາສຳຄັນພື້ນຖານຂອງຊາດ, ການຕິດຕາມກວດກາ, ການສ້າງຄວາມເຂັ້ມແຂງ, ການພົວພັນຕ່າງປະເທດ ແລະ ກຳມະການສັງກັດກຳມາທິການ ປະຈຳເຂດເລືອກຕັ້ງ ຕ້ອງມີການເພີ່ມທະວີເອົາໃຈໃສ່ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອເຮັດໃຫ້ວຽກງານສຳເລັດ ແລະ ບັນລຸໄດ້ຕາມລະດັບຄາດໝາຍທີ່ວາງໄວ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

(ນາງ ປາກາລັກ ພິມມີໄຊ)

## ຝຶກອົບຮົມ...

(ຕໍ່ຈາກໜ້າ 1)

ໂດຍສະເພາະໃນການເປັນເສນາທິການ ໃຫ້ແກ່ຄະນະເລຂາທິການສະພາແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນເພີ່ມຂຶ້ນ, ຮັບປະກັນຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຕົວຈິງ ແລະ ສອດຄ່ອງຕາມລະບຽບຫຼັກການ; ເພື່ອເຜີຍແຜ່ນິຕິກຳທີ່ຕິດພັນກັບຂົງເຂດວຽກງານຂອງຄະນະເລຂາທິການສະພາແຫ່ງຊາດ ທີ່ເປັນບ່ອນອີງໃນການຈັດຕັ້ງຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ ແລະ ເພື່ອຖອດຖອນບົດຮຽນ ແລະ ແລກປ່ຽນຄຳຄິດຄຳເຫັນ ໃນຂະບວນການເຄື່ອນໄຫວວຽກງານຂອງບັນດາກົມ ແລະ ຫ້ອງການ ທີ່ຂຶ້ນກັບຄະນະເລຂາທິການສະພາແຫ່ງຊາດ; ໃນລະຫວ່າງວັນທີ 10-13 ມັງກອນ 2023 ທີ່ຫ້ອງປະຊຸມສະພາແຫ່ງຊາດ ໄດ້ມີກອງປະຊຸມຝຶກອົບຮົມວຽກງານກວດກາ ແລະ ວຽກງານການກຳນົດຕຳແໜ່ງງານ ໂດຍການເປັນປະທານຂອງສະຫາຍ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ເລຂາທິການສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາຄະນະເລຂາທິການສະພາແຫ່ງຊາດ, ຄະນະຊ່ວຍວຽກພັກສະພາແຫ່ງຊາດ, ຜູ້ຮັບຜິດຊອບວຽກງານພັກ-ພະນັກງານ ແລະ ຄະນະກວດກາ ຫຼື ຜູ້ກວດກາຂອງບັນດາໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານຄະນະເລຂາທິການສະພາແຫ່ງຊາດ.

ໃນກອງປະຊຸມ, ໄດ້ຮັບຟັງການເຜີຍແຜ່ນິຕິກຳກ່ຽວກັບວຽກງານກວດກາພັກ: ການກວດກາການຈັດຕັ້ງພັກ-ລັດ ແລະ ສະມາຊິກພັກ, ພະນັກງານ-ລັດຖະກອນ ເມື່ອມີປະກົດການຫຍໍ້ທໍ້; ກ່ຽວກັບວຽກງານກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ: ວຽກງານແກ້ໄຂຄຳຮ້ອງຄຳສະເໜີ, ການແກ້ໄຂຜົນການກວດກາ ແລະ ກວດກາໂຄງການລົງທຶນຂອງລັດແຕ່ຫົວທີຈາກຄະນະກວດກາສູນກາງພັກ; ການເຜີຍແຜ່ນິຕິກຳກ່ຽວກັບຄວາມຮູ້ພື້ນຖານການວິເຄາະ ແລະ ກຳນົດຕຳແໜ່ງງານ ຈາກກະຊວງພາຍໃນ; ພ້ອມນັ້ນ, ຜູ້ເຂົ້າຮ່ວມໄດ້ສົນທະນາທົບທວນຄືນການຂຽນກຳນົດຕຳແໜ່ງງານຂອງບັນດາກົມ ແລະ ຫ້ອງການທີ່ຂຶ້ນກັບຄະນະເລຂາທິການສະພາແຫ່ງຊາດ; ຈາກນັ້ນ, ກອງປະຊຸມ ຍັງໄດ້ຮັບຟັງການສະເໜີຜົນການວິເຄາະ ແລະ ກຳນົດຕຳແໜ່ງງານ ຈາກກົມເລຂານຸການ, ກົມບໍລິຫານ, ຕາງໜ້າຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ພ້ອມທັງສົນທະນາແລກປ່ຽນບັນຫາ ແລະ ຂໍ້ຫຍຸ້ງຍາກໃນການວິເຄາະ ແລະ ກຳນົດຕຳແໜ່ງງານ.

(ຂ່າວ: ສຸພາວັນ ທອນສະນິດ; ພາບ: ກຸກກິກ ບຸດດາໄຊ)

# ກອງປະຊຸມຄະນະປະຈຳ ສພຊ (ສາມັນ) ຄັ້ງທີ 8



(ສພຊ) ວັນທີ 5 ມັງກອນ 2023 ທີ່ຫ້ອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ໄດ້ຈັດກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ (ສາມັນ) ຄັ້ງທີ 8 ໂດຍການເປັນປະທານຂອງທ່ານ ສົມຈິດ ທັບລະກອນ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ; ເຂົ້າຮ່ວມມີບັນດາທ່ານກຳມະການຄະນະປະຈຳ ສພຂ, ຮອງປະທານຄະນະກຳມະການ, ຮອງເລຂາທິການ ສພຂ ແລະ ວິຊາການກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ແມ່ນເພື່ອຮັບຟັງລາຍງານຄວາມພ້ອມໃນການກະກຽມດຳເນີນກອງປະຊຸມຄົບຄະນະປະຈຳປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ, ຄະນະກຳມະການ, ກອງປະຊຸມປະຈຳປີ 2022 ຂອງຄະນະເລຂາທິການສະພາປະຊາຊົນແຂວງ ແລະ ການກະກຽມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ແລະ ປຶກສາຫາລືວຽກພາຍໃນ ສພຂ ອີກຈຳນວນໜຶ່ງ.

ທີ່ປະຊຸມ, ທ່ານ ນາງ ພອນສະຫວັນ ສັກຕິຄຸນ ກຳມະການຄະນະປະຈຳສະພາປະຊາຊົນແຂວງ, ເລຂາທິການສະພາປະຊາຊົນແຂວງ ໄດ້ລາຍງານການສັງລວມບັນດາໜ້າວຽກໃໝ່ ເພື່ອນຳເຂົ້າປຶກສາຫາລືໃນກອງປະຊຸມຄະນະປະຈຳ ສພຂ ໃນຄັ້ງນີ້ ແລະ ໄດ້ຮັບຟັງການລາຍງານຄວາມພ້ອມການກະກຽມຕ້ອນຮັບການມາຢ້ຽມຢາມ ແລະ ເຄື່ອນໄຫວເຮັດວຽກຂອງຮອງປະທານສະພາແຫ່ງຊາດ; ການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II; ກອງປະຊຸມຄົບຄະນະປະຈຳປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 2 ແຂວງຜົ້ງສາລີ ແລະ ກອງປະຊຸມປະຈຳປີຂອງຄະນະເລຂາທິການ ສພຂ; ຮັບຟັງຕາງໜ້າຈາກ 3 ຄະນະກຳມະການ ສພຂ ລາຍງານການກະກຽມຄວາມກອງປະຊຸມຄົບຄະນະປະຈຳປີ 2022 ຂອງຄະນະກຳທະການ ສພຂ.

ຈາກນັ້ນ, ຄະນະປະຈຳ ສພຂ ແລະ ຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ປຶກສາຫາລື ແລະ ແລກປ່ຽນຄວາມຄິດເຫັນຕໍ່ບັນດາເນື້ອໃນທີ່ນຳເຂົ້າໃນກອງປະຊຸມຄັ້ງນີ້ ເພື່ອຮັບປະກັນໃຫ້ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ສາມາດເປີດຂຶ້ນໄດ້ຕາມແຜນການທີ່ໄດ້ກຳນົດ ທັງປະກັນໃຫ້ເນື້ອໃນທີ່ຈະນຳເຂົ້າໃນກອງປະຊຸມມີຄວາມເປັນເອກະພາບ.

ຕອນທ້າຍກອງປະຊຸມ, ທ່ານ ສົມຈິດ ທັບລະກອນ ໄດ້ສັງລວມຄືນຜົນກອງປະຊຸມໃນຄັ້ງນີ້ ພ້ອມທັງຮຽກຮ້ອງໃຫ້ບັນດາທ່ານກຳມະການຄະນະປະຈຳ ສພຂ ນຳເອົາເນື້ອໃນຈິດໃຈກອງປະຊຸມຄັ້ງນີ້ ໄປຜັນຂະຫຍາຍເຂົ້າໃນການຈັດຕັ້ງປະຕິບັດວຽກງານ ຕາມພາລະບົດບາດຂອງຕົນ ແລະ ຍັງໄດ້ເນັ້ນໜັກຕື່ມ ໃຫ້ 3 ຄະນະກຳການ ແລະ ຄະນະເລຂາທິການ ສພຂ ເອົາໃຈໃສ່ໃນການກະກຽມກອງປະຊຸມ ຕາມແຜນການທີ່ໄດກຳນົດ ແລະ ໃຫ້ເອົາໃຈໃສ່ໃນການຄົ້ນຄວ້າ, ວິເຄາະວິໄຈບັນຫາຕ່າງໆ ໃຫ້ຣັດກຸມ, ຈະແຈ້ງ ແລະ ພາວະວິໄສ ໂດຍສະເພາະບັນດາມະຕິທີ່ຈະຮັບຮອງ, ບົດລາຍງານ, ບົດປະກອບຄຳເຫັນ ລວມບົດສັງລວມຄວາມເຫັນໃຫ້ແກ່ຄະນະປະທານກອງປະຊຸມ ແລະ ບົດອື່ນໆ ເພື່ອໃຫ້ກອງປະຊຸມດັ່ງກ່າວໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ສຳມະນາຮ່າງນິຕິກຳກ່ອນຈະນຳເຂົ້າ ພິຈາລະນາ ໃນກອງປະຊຸມສະໄໝສາມັນເທື່ອທີ 4




(ສພຊ) ສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ຈັດກອງປະຊຸມສຳມະນາຮ່າງນິຕິກຳຂອງນະຄອນຫຼວງວຽງຈັນ ຈຳນວນ 4 ສະບັບ ກ່ອນຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II ໃນລະຫວ່າງວັນທີ 4-5 ມັງກອນ 2023 ທີ່ຫ້ອງວ່າການນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ບຸນທາມ ພຸດທະວົງສາ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ, ມີທ່ານ ພູວົງ ວົງຄຳຊາວ ຮອງເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ, ບັນດາທ່ານສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ຄະນະຮັບຜິດຊອບຮ່າງນະຕິກຳເຂົ້າຮ່ວມ.

ທ່ານ ບຸນທາມ ພຸດທະວົງສາ ໄດ້ກ່າວວ່າ: ໂດຍປະຕິບັດກົດໝາຍວ່າດ້ວຍການສ້າງນະຕິກຳ ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທີ່ກຳນົດກ່ຽວກັບກົນໄກຂັ້ນຕອນໃນການພິຈາລະນາບັນດາຮ່າງນິຕິກຳສຳຄັນພື້ນຖານຂອງນະຄອນຫຼວງວຽງຈັນ ກ່ອນການດຳເນີນກອງປະຊຸມສະໄໝສາມັນຂອງສະພາປະຊາຊົນ ແຕ່ລະຄັ້ງ ດັ່ງນັ້ນ, ເພື່ອເປັນການລະດົມຄວາມຄິດເຫັນຈາກບັນດາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ຊາວນະຄອນຫຼວງວຽງຈັນ ໃສ່ບັນດາຮ່າງນິຕິກຳທີ່ສຳຄັນ ເພື່ອເປັນການປະກອບສ່ວນປັບປຸງເນື້ອໃນບັນດາຮ່າງນິຕິກຳເຫຼົ່ານັ້ນໃຫ້ມີຄວາມສົມບູນ, ຄົບຖ້ວນ, ຖືກຕ້ອງສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ ພ້ອມທັງສອດຄ່ອງກັບສະພາບຈຸດພິເສດ ແລະ ຄວາມເປັນຈິງຂອງນະຄອນຫຼວງວຽງຈັນ ກ້າວໄປສູ່ການນຳສະເໜີບັນດາຮ່າງນິຕິກຳ 4 ສະບັບ ເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II ທີ່ໄຂຂຶ້ນໃນລະຫວ່າງ ວັນທີ 11-19 ມັງກອນ 2023.

ບັນດາເນື້ອໃນນິຕິກຳ 4 ສະບັບ ທີ່ຄົ້ນຄວ້າ ແລະ ປຶກສາຫາລືປະກອບຄຳຄິດເຫັນໃນການສຳມະນາຄັ້ງນີ້ ມີຮ່າງນິຕິກຳສ້າງຂຶ້ນໃໝ່ 2 ສະບັບຄື: 1) ຮ່າງລັດຖະບັນຍັດຂອງປະທານປະເທດວ່າດ້ວຍນະຄອນຫຼວງ ປະກອບມີ 7 ໝວດ 51 ມາດຕາ; 2) ຮ່າງລັດຖະບັນຍັດຂອງປະທານປະເທດວ່າດ້ວຍອາກອນຕົວເມືອງ ປະກອບມີ 10 ໝວດ 31 ມາດຕາ ເພື່ອເປັນການຜັນຂະຫຍາຍມະຕິກົມການເມືອງສູນກາງພັກວ່າດ້ວຍການພັດທະນານະຄອນຫຼວງວຽງຈັນໃນໄລຍະໃໝ່ ແລະ ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ VII ຂອງອົງຄະນະພັກນະຄອນຫຼວງວຽງຈັນໃຫ້ເປັນນິຕິກຳອັນລະອຽດ. ສ່ວນຮ່າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຮອບດ້ານຂອງນະຄອນຫຼວງ ເປັນນິຕິກຳທີ່ເຄີຍພິຈາລະນາຜ່ານມາແລ້ວ, ໄດ້ຮັບຮອງເອົາດ້ານຫຼັກການ ແລະ ໄດ້ສະເໜີໃຫ້ອົງການປົກຄອງນະຄອນຫຼວງວຽງຈັນ ໄປຄົ້ນຄວ້າແຜນລະອຽດ ເພື່ອນຳມາສະເໜີຕໍ່ກອງປະຊຸມຕື່ມ ປະກອບມີ 4 ພາກໃຫຍ່ ແລະ ຮ່າງຂໍ້ຕົກລົງຂອງເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການຈັດຕັ້ງປະຕິບັດມາດຕະການສ້າງນະຄອນຫຼວງ ສະອາດ (ສ.ສະອາດ) ປະກອບມີ 8 ໝວດ 29 ມາດຕາ ແມ່ນນິຕິກຳຜັນຂະຫຍາຍນະໂຍບາຍ ສ.ສະອາດ ຂອງນະຄອນຫຼວງວຽງຈັນ ທີ່ໄດ້ມີນະໂຍບາຍກ່ອນໜ້ານີ້ແລ້ວ.

# ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ແຜນງົບປະມານ 6 ເດືອນທ້າຍປີ 2022



(ສພຊ) ເພື່ອປະຕິບັດຕາມກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາປະຊາຊົນຂັ້ນແຂວງ, ມະຕິກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງໄຊສົມບູນວ່າດ້ວຍການຮັບຮອງເອົາແຜນການຈັດຕັ້ງ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນທ້າຍປີ 2022 ໃຫ້ບັນລຸຕາມແຜນ ແລະ ເພື່ອເກັບກຳຂໍ້ມູນເປັນບ່ອນອີງໃນການຊັກຖາມ, ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງອົງການປົກຄອງແຂວງ, ໃນລະຫວ່າງວັນທີ 3-6 ມັງກອນ 2023 ໄດ້ມີການເຄື່ອນໄຫວຕິດຕາມກວດກາ ຢູ່ທີ່ເມືອງລ້ອງຊານ ນຳໂດຍທ່ານ ຄຳພູທອນ ວົງພະຈັນ ຮອງປະທານສະພາປະຊາຊົນແຂວງໄຊສົມບູນ ພ້ອມດ້ວຍບັນດາສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເມືອງ ແລະ ບັນດາພະນັກງານ-ວິຊາການເຂົ້າຮ່ວມຕິດຕາມ.

ໃນການເຄື່ອນໄຫວຄັ້ງນີ້ ກໍເພື່ອຕິດຕາມ, ເກັບກຳຂໍ້ມູນ, ວິເຄາະ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງອົງການປົກຄອງແຂວງ ທຽບໃສ່ມະຕິກອງປະຊຸມສະພາປະຊາຊົນແຂວງ, ຊຸກຍູ້, ຕິດຕາມ ແລະ ຮັບຟັງການລາຍງານສະພາບທີ່ພົ້ນເດັ່ນໂດຍຫຍໍ້ ໃນການຈັດຕັ້ງປະຕິບັດວຽກງານຂອງແຕ່ລະຂະແໜງການ ໃນຂົງເຂດເສດຖະກິດຂອງແຂວງ ແລະ ບັນດາຫ້ອງການເສດຖະກິດຂອງບັນດາເມືອງ; ຕິດຕາມກວດກາ ແລະ ເກັບກຳສະພາບການຈັດຕັ້ງປະຕິບັດ ບາງໂຄງການທີ່ພົ້ນເດັ່ນຂອງບັນດາຂະແໜງການຕ່າງໆຂອງແຂວງ ແລະ ບັນດາເມືອງ; ຊຸກຍູ້ຕິດຕາມຊັກຖາມຕ່າງໆ ແລະ ເກັບກຳເອົາຄຳຄິດເຫັນຂອງພໍ່ແມ່ປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກການຈັດຕັ້ງປະຕິບັດໂຄງການທີ່ຂັ້ນແຂວງ ແລະ ຂັ້ນເມືອງອະນຸຍາດ ທັງນີ້, ກໍເພື່ອຊອກຫາວິທີທາງໃນການຊຸກຍູ້ການຈັດຕັ້ງປະຕິບັດແຜນພັທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ໃນແຕ່ລະໄລຍະຂອງອົງການປົກຄອງແຂວງໃຫ້ສາມາດບັນລຸຕາມແຜນການທີ່ສະພາປະຊາຊົນແຂວງຮັບຮອງ, ເກັບກຳຂໍ້ມູນເພື່ອເປັນບ່ອນອີງໃນການວິເຄາະ, ປະເມີນບຸກຄະລາກອນທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ພິຈາລະນາຮັບຮອງເອົາການຈັດຕັ້ງ ແລະ ກ້າວໄປເຖິງການນຳໃຊ້ຜົນຂອງການຕິດຕາມກວດກາ ເພື່ອພິຈາລະນາການໃຫ້ຄະແນນ, ການລົງມະຕິບໍ່ໄດ້ວາງໃຈຕາມກົດໝາຍວ່າດ້ວຍຕິດຕາມກວດກາ (ມາດຕາ 64), ເພື່ອຍົກສູງສິດ, ພາລະບົດບາດໃນການຕິດຕາມກວດກາໃນນາມຕົວແທນຂອງປະຊາຊົນຕາມທີ່ກົດໝາຍກຳນົດ.

ພ້ອມນັ້ນ, ຍັງໄດ້ຮັບຟັງບົດລາຍງານຫຍໍ້ກ່ຽວກັບບັນຫາທີ່ເກີດຂຶ້ນຢູ່ພາຍໃນເມືອງຂອງຕົນ ໃນຂົງເຂດຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຂົງເຂດເສດຖະກິດ-ສັງຄົມ, ຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ກ່ຽວກັບບັນຫາຕ່າງໆທີ່ຍັງບໍ່ທັນໄດ້ຮັບການແກ້ໄຂ ແລະ ແກ້ໄຂສຳເລັດແລ້ວ ເພື່ອເກັບກຳຂໍ້ມູນ ແລະ ສັງລວມລາຍງານຕໍ່ຄະນະປະຈຳສະພາປະຊາຊົນແຂວງໄຊສົມບູນ ເພື່ອເປັນຂໍ້ມູນໃນການປະກອບຄຳເຫັນໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ແລ້ວລາຍງານໃຫ້ສະພາແຫ່ງຊາດ ຢ່າງລະອຽດທີ່ເປັນລາຍລັກອັກສອນ.

(ແສງຕາວັນ ລັດຕະວົງ)

# ການເຄື່ອນໄຫວວຽກງານຂອງປະທານຄະນະ ສສຊ ສາລະວັນ



(ສພຊ) ວັນທີ 5 ມັງກອນ 2023 ຢູ່ທີ່ສະໂມສອນແຂວງສາລະວັນ, ຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ 14 ແຂວງສາລະວັນ ໄດ້ເປີດກອງປະຊຸມຮັບຟັງການລາຍງານກ່ຽວກັບ ສສຊ ປະຈຳເຂດເລືອກຕັ້ງທີ 14 ສາລະວັນ, ສຳເລັດການເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX; ເປັນປະທານກອງປະຊຸມໂດຍທ່ານ ສີເຮັງ ຫອມສິມບັດ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ; ເຂົ້າຮ່ວມຮັບຟັງມີຄະນະປະຈຳສະພາປະຊາຊົນແຂວງສາລະວັນ, ສສຊ, ສະມາຊິກສະພາປະຊາຊົນຂວງ (ສສຂ), ມີຕາງໜ້າຈາກກົມກອງ, ພະແນກການອ້ອມຂ້າງແຂວງ, ອົງການຈັດຕັ້ງມະຫາຊົນ ແລະ ອົງການປົກຄອງຂັ້ນເມືອງ ພ້ອມດ້ວຍພະນັກງານ-ລັດຖະກອນ ພາຍໃນ ສພຂ ເຂົ້າຮ່ວມຮັບຟັງທັງໝົດ 80 ກວ່າທ່ານ.

ໃນກອງປະຊຸມ, ທ່ານ ສີເຮັງ ຫອມສິມບັດ ໄດ້ລາຍງານໃຫ້ຮູ້ວ່າ: ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຊ ຊຸດທີ IX ໄດ້ໄຂຂຶ້ນລະຫວ່າງວັນທີ 5-30 ທັນວາ 2022 ທີ່ຫ້ອງປະຊຸມສະພາແຫ່ງຊາດ ນະຄອນຫລວງວຽງຈັນ ພາຍໃຕ້ການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ມີບັນດາທ່ານ ສສຊ ໃນທົ່ວປະເທດເຂົ້າຮ່ວມຢ່າງພ້ອມພຽງ ໃນນັ້ນ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ເຂົ້າຮ່ວມທັງໝົດ 8 ທ່ານ ຍິງ 2 ທ່ານ, ຂາດ 1 ທ່ານ ຍ້ອນເຂົ້າຮ່ວມບຳລຸງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄລຍະ 64 ວັນ ຊຸດທີ XX ຢູ່ວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ. ກອງປະຊຸມເທື່ອນີ້ ໄດ້ຮັບກຽດຢ່າງສູງໃນການເຂົ້າຮ່ວມ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປລາວ; ນາຍົກລັດຖະມົນຕີ ພ້ອມດ້ວຍບັນດາທ່ານຜູ້ນຳ, ອະດີດການນຳຂັ້ນສູງພັກ-ລັດ, ບັນດາທ່ານສະມາຊິກລັດຖະບານ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ຜູ້ຊົງຄຸນວຸດທິ, ສະຖາບັນການສຶກສາ, ຫົວໜ່ວຍທຸລະກິດ ແລະ ພາກສ່ວນຕ່າງໆ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຊ ຊຸດທີ IX ນີ້ແມ່ນໄດ້ຮັບຟັງການລາຍງານ, ພິຈາລະນາຮັບຮອງບັນດາເນື້ອໃນທີ່ສຳຄັນ ດັ່ງນີ້: ບົດລາຍງານການເຄື່ອນໄຫວວຽກງານພົ້ນເດັ່ນ ປະຈຳປີ 2022 ແລະ ທິດທາງແຜນການ ໃນປີ 2023 ຂອງລັດຖະບານ; ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023; ບົດລາຍງານຂອງລັດຖະບານ ກ່ຽວກັບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປີ 2021; ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປີ 2022 ແລະແຜນງົບປະມານແຫ່ງລັດປີ2023; ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023; ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງນາຍົກລັດຖະມົນຕີ ແຫ່ງ ສປປລາວ ຜູ້ໃໝ່; ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ປະຈຳປີ 2022 ແລະແຜນການປະຈຳປີ 2023; ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023; ບົດລາຍງານຂອງລັດຖະບານ ກ່ຽວກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ວຽກເຮັດງານທຳໃຫ້ປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ; ບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021; ບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023; ບົດລາຍງານຜົນການກວດກາຕາມຜົນການກວດສອບ ປີ 2020; ບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023; ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະແຜນການເຄື່ອນໄຫວວຽກງານ ປະຈຳປີ 2023.

ກອງປະຊຸມພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 12 ສະບັບ ໃນນີ້, ກົດໝາຍສ້າງໃໝ່ 3 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍໜັງສືຜ່ານແດນ; ຮ່າງກົດໝາຍວ່າດ້ວຍການທາງນ້ຳ ແລະ ຮ່າງກົດໝາຍວ່າດ້ວຍຫໍພິພິທະພັນ; ກົດໝາຍປັບປຸງ 9 ສະບັບ ຄື: ກົດໝາຍວ່າດ້ວຍທະນາຍຄວາມ; ກົດໝາຍວ່າດ້ວຍທະບຽນສານ; ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່; ກົດໝາຍວ່າດ້ວຍວິສາຫະກິດ; ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ; ກົດໝາຍວ່າດ້ວຍອົງການໄອຍະການທະຫານ; ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ; ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ແລະ ກົດໝາຍວ່າດ້ວຍການກວດກາລັດ.

ກອງປະຊຸມໄດ້ຮັບຟັງການລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ຜົນການຕິດຕາມກວດກາຂອງສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ; ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ ຊຸດທີ IX ແຕ່ປີ 2023-2025.

ໃນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຊ ຊຸດທີ IX ນີ້, ສພຊ ໄດ້ສະເໜີໃຫ້ 19 ພາກສ່ວນ ຂຶ້ນຊີ້ແຈງຕໍ່ຄຳຊັກຖາມກ່ຽວກັບບັນຫາທີ່ພົ້ນເດັ່ນຂອງສັງຄົມ ເຊິ່ງ ສພຊ ແລະ ສສຊ ໄດ້ຍົກຂຶ້ນຢູ່ໃນກອງປະຊຸມປະກອບມີທ່ານນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ທະນາຄານແຫ່ງ ສປປລາວ, ກະຊວງອຸດສາຫະກຳ-ການຄ້າ, ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງກະສິກຳ-ປ່າໄມ້, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສຶກສາທິການ ແລະ ກິລາ, ກະຊວງຍຸຕິທຳ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ກະຊວງການຕ່າງປະເທດ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງສາທາລະນະສຸກ, ກະຊວງປ້ອງກັນປະເທດ ແລະ ກະຊວງເຕັກໂນໂລຊີ ແລະ ການສື່ສານ.

ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນເປັນເວລາ 20 ວັນ (ບໍ່ລວມວັນພັກລັດຖະການ) ກໍໄດ້ປິດລົງຢ່າງເປັນທາງການດ້ວຍຜົນສຳເລັດອັນຈົບງາມ ໃນຕອນບ່າຍຂອງວັນທີ 30 ທັນວາ 2022.

ຕອນທ້າຍ, ປະທານກອງປະຊຸມກໍໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ມີການປະກອບຄຳຄິດຄຳເຫັນ, ມີຄຳສະເໜີ ແລະ ແລກປ່ຽນບາງບັນຫາທີ່ຜູ້ມີສິດເລືອກຕັ້ງໃຫ້ຄວາມສົນໃຈ ພ້ອມທັງຮັບຟັງອະທິບາຍ ແລະ ຊີ້ແຈງກັບທີ່ຕໍ່ກັບບັນຫາທີ່ຕັ້ງຂຶ້ນ.

ຕອນບ່າຍຂອງວັນດຽວກັນນີ້, ເພື່ອເປັນການກະກຽມຂໍ້ມູນໃຫ້ແກ່ ສສຊ ທີ່ສັງກັດຢູ່ກຳມະການຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ຈະເຂົ້າຮ່ວມກອງປະຊຸມລາຍງານ ແລະ ປະກອບຄຳຄິດຄຳເຫັນ ຕໍ່ກອງປະຊຸມຄົບຄະນະກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ປະຈຳປີ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນ ໄດ້ຈັດກອງປະຊຸມຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບຟັງການລາຍງານ ແລະ ປຶກສາຫາລືວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງ.

ກອງປະຊຸມຄັ້ງນີ້ ໂດຍການເປັນປະທານຂອງທ່ານ ສີເຮັງ ຫອມສິມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 14 ແຂວງສາລະວັນ; ເຂົ້າຮ່ວມມີເລຂາທິການ, ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ມີຕາງໜ້າຈາກກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ສະຫະພັນນັກຮົບເກົ່າແຂວງ ແລະ ຫ້ອງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງ.

ກອງປະຊຸມໄດ້ຍົກເອົາບາງບັນຫາປຶກສາຫາລື, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ລາຍງານຕໍ່ກອງປະຊຸມ ໂດຍສະເພາະຜົນຂອງການຈັດຕັ້ງປະຕິບັດການຕິດຕາມກວດກາວຽກງານໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕິດພັນກັບວຽກງານວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ວຽກງານແກ້ໄຂປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານໃນໄລຍະສົງຄາມຮຸກຮານລາວ ແລະ ບັນຫາອື່ນໆ.

(ດີລຳພົນ ພົມມະຈັນ)



# ບົດສຳພາດປະທານຄະນະ ສສຊ ເຂດເລືອກຕັ້ງທີ 7



ທ່ານ ເຜິ້ງນິລັນ ຄຳພັນເຜິ້ງ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ໄດ້ຕາງໜ້າໃຫ້ ສສຊ ປະຈຳເຂດເລືອກຕັ້ງທີ 7 ກໍຄືສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ທີ່ໄດ້ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ສຳພາດຕໍ່ສື່ມວນຊົນ ກ່ຽວກັບຜົນສຳເລັດທີ່ພົ້ນເດັ່ນຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 7 ກໍຄື ສພຂ ໄຊຍະບູລີ ເຊິ່ງທ່ານໃຫ້ຮູ້ວ່າ: ໄດ້ມີການຜັນຂະຫຍາຍມະຕິກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ມາເປັນແຜນການເຄື່ອນໄຫວລະອຽດຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ, ສພຂ ແລະ ນຳພາ-ຊີ້ນຳໃນການຈັດຕັ້ງປະຕິບັດມີຜົນສຳເລັດຫຼາຍດ້ານ ເຊິ່ງໄດ້ຮັບປະກັນເຮັດໃຫ້ແຂວງມີຄວາມສະຫງົບ, ມີສະຖຽນລະພາບທາງດ້ານການເມືອງ, ເສດຖະກິດຂອງແຂວງ ມີທ່າອ່ຽງຂະຫຍາຍຕົວຂຶ້ນ ຄາດວ່າທ້າຍປີ 2022 ຈະບັນລຸ 4,8% ລວມຍອດຜະລິດຕະພັນພາຍໃນ ຕໍ່ຫົວຄົນສະເລ່ຍ 3.090 ໂດລາ/ຄົນ/ປີ; ໄດ້ປັບປຸງແບບແຜນວິທີເຮັດວຽກ ພາຍໃນຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 7 ແລະ ສພຂ ເພື່ອໃຫ້ສາມາດເຄື່ອນໄຫວຕາມພາລະບົດບາດຂອງຕົນ; ປັບປຸງການຈັດຕັ້ງຕິດພັນກັບການຂຽນແຜນກຳນົດຕຳແໜ່ງງານຂອງ ສພຂ ເພື່ອສະເໜີຕໍ່ຄະນະປະຈຳພັກແຂວງ ຕົກລົງ; ໄດ້ລົງພົບປະຜູ້ມີສິດເລືອກຕັ້ງ ໃນເຂດເລືອກຕັ້ງຕ່າງໆພາຍໃນແຂວງ ໄດ້ທັງໝົດ 89 ຈຸດ; ໄດ້ຕິດຕາມກວດກາ ແລະ ຊຸກຍູ້ບັນດາໂຄງການລົງທຶນຂອງລັດ ທີ່ສູນກາງຄຸ້ມຄອງຢູ່ແຂວງໄຊຍະບູລີ ຈຳນວນ 94 ໂຄງການ, ມູນຄ່າ 948,11 ຕື້ກີບ; ໄດ້ລົງຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວາລະແຫ່ງຊາດ ຢູ່ບັນດາພະແນກການ, ກົມກອງຂອງແຂວງ 1 ຄັ້ງ, ມີ 9 ພາກສ່ວນ; ພ້ອມນີ້, ກໍໄດ້ຈັດຕັ້ງປະເມີນກົດໝາຍ ຈຳນວນ 4 ສະບັບ ທີ່ສະພາແຫ່ງຊາດ ສົ່ງໃຫ້ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ; ໄດ້ສົມທົບຄະນະປະຈຳ ສພຂ ເຂົ້າຮ່ວມທາບທາມຮ່າງກົດໝາຍ ທີ່ກະຊວງ ແລະ ບັນດາກຳມາທິການນຳມາທາບທາມ ຈຳນວນ 18 ສະບັບ; ໄດ້ຊຸກຍູ້ ສພຂ ແລະອົງການປົກຄອງແຂວງ ແກ້ໄຂຄຳສະເໜີ-ສາຍດ່ວນ ແລະ ຄຳຮ້ອງຂໍຄວາມເປັນທຳຂອງຜູ້ມີສິດເລືອກຕັ້ງ ທັງໝົດ 76 ຄຳສະເໜີ (ຄຳສະເໜີ 52 ຄຳສະເໜີ, ສາຍດ່ວນ 24 ສາຍ) ໄດ້ແກ້ໄຂແລ້ວ 28 ຄຳສະເໜີ, ພວມສືບຕໍ່ແກ້ໄຂ 24; ສາຍດ່ວນແກ້ໄຂແລ້ວ 22 ສາຍ, ພວມສືບຕໍ່ແກ້ໄຂ 2 ສາຍ; ໄດ້ຮັບຄຳຮ້ອງຂໍຄວາມເປັນທຳ ຈຳນວນ 9 ເລື່ອງ, ຄົ້ນຄວ້າພິຈາລະນາແກ້ໄຂແລ້ວ 5 ເລື່ອງ, ພວມສືບຕໍ່ແກ້ໄຂ 4 ເລື່ອງ; ໄດ້ຊຸກຍູ້ຄະນະປະຈຳ ສພຂ ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງບັນຫາສຳຄັນຂອງທ້ອງຖິ່ນ ເປັນຕົ້ນແມ່ນແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງແຂວງ 6 ເດືອນຕົ້ນປີ ແລະ 6 ເດືອນທ້າຍປີ 2022, ປະທານສານເຂດ (ເຂດ 1), ຮອງຫົວໜ້າອົງການໄອຍະການປະຊາຊົນເຂດ (ເຂດ 1); ໄດ້ສົມທົບຄະນະປະຈຳ ສພຂ ຊຸກຍູ້ອົງການປົກຄອງແຂວງ ອອກນິຕິກຳໃຕ້ກົດໝາຍ ເພື່ອຮັບໃຊ້ໃນການປະຕິບັດພາລະບົດບາດຂອງຕົນ ໄດ້ 4 ສະບັບຄື: ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງກອງທຶນສົ່ງເສີມ ແລະ ການພັດທະນາກິລາ-ກາຍຍະກຳແຂວງ (ປັບປຸງ); ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງບໍລິຫານຕົວເມືອງ (ປັບປຸງ); ຂໍ້ຕົກລົງວ່າດ້ວຍກອງທຶນເລືອດແຂວງໄຊຍະບູລີ (ສ້າງໃໝ່), ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງກອງທຶນ, ຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ (ປັບປຸງ); ໄດ້ຊຸກຍູ້ຄະນະປະຈຳ ສພຂ ອອກນິຕິກຳຮັບໃຊ້ພາຍໃນ ສພຂ ຈຳນວນ 9 ສະບັບ; ໄດ້ເຂົ້າຮ່ວມເຄື່ອນໄຫວວຽກງານການຕ່າງປະເທດ ຕາມກົນໄກການປະສານງານຂອງກຳມາທິການຕ່າງໆ ແລະ ແຂວງແຮກສ່ຽວຂອງ ສສ.ຫວຽດນາມ ຄື: ແຂວງເຊີນລາ, ແຂວງທ້າຍບິງ ແລະ ອື່ນໆ.

ທ່ານ ເຜິ້ງນິລັນ ຄຳພັນເຜິ້ງ ຍັງໃຫ້ຮູ້ຕື່ມກ່ຽວກັບການພົບປະຜູ້ມີສິດເລືອກຕັ້ງວ່າ: ໂດຍປະຕິບັດຕາມພາລະບົດບາດຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ໄດ້ສົມທົບກັບ ສພຂ ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ໄດ້ທັງໝົດ 89 ຈຸດ, ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 12.891 ຄົນ ຍິງ 6.248 ຄົນ (ໃນນັ້ນ, ຂັ້ນແຂວງ ໄດ້ 4 ຈຸດ, ມີຜູ້ເຂົ້າຮ່ວມ 551 ຄົນ ຍິງ 99 ຄົນ; ຂັ້ນເມືອງໄດ້ 85 ຈຸດ, ມີຜູ້ເຂົ້າຮ່ວມ 12.340 ຄົນ ຍິງ 6.149 ຄົນ); ຕິດພັນການການລົງພົບປະຜູ້ມີສິດເລືອກຕັ້ງ ໄດ້ນຳເອົາເຄື່ອງຊ່ວຍເຫຼືອທີ່ເປັນວັດຖຸ ແລະ ເງິນສົດ ມອບໃຫ້ການຈັດຕັ້ງຕ່າງໆ ແລະ ຜູ້ມີສິດເລືອກຕັ້ງ ລວມມູນຄ່າທັງໝົດ 170,5 ລ້ານກີບ; ການພົບປະຜູ້ມີສິດເລືອກຕັ້ງໃນຄັ້ງນີ້ ໄດ້ນຳເອົາຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສພຂ ຊຸດທີ II ເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງ ເຊິ່ງໄດ້ສ້າງຄວາມຮັບຮູ້, ເຂົ້າໃຈໃຫ້ຜູ້ມີສິດເລືອກຕັ້ງເປັນຢ່າງດີ.

ໃນການລົງພົບປະຜູ້ມີສິດເລືອກຕັ້ງ ແລະ ຕິດຕາມກວດກາ, ທ່ານ ເຜິ້ງນິລັນ ຄຳພັນເຜິ້ງ ໃຫ້ຮູ້ວ່າ: ບັນຫາທີ່ປະຊາຊົນສະເໜີຫຼາຍກວ່າໝູ່ແມ່ນບັນຫາການພັດທະນາພື້ນຖານໂຄງລ່າງ ເປັນຕົ້ນແມ່ນເສັ້ນທາງ, ຕ້ານເຈື່ອນ, ສຳນັກງານ-ອົງການບ່ອນເຮັດວຽກ, ນ້ຳປະປາ-ນ້ຳລິນ; ລາຄາສິນຄ້າ, ນ້ຳມັນເຊື້ອໄຟ ທີ່ເພີ້ມຂຶ້ນ; ການສະເໜີຂໍປັບລາຄາສິນຄ້າກະສິກຳໃຫ້ສູງຂຶ້ນ ເປັນຕົ້ນແມ່ນສາລີ, ໝາກເດືອຍ, ມັນຕົ້ນ, ຢາງພາລາ; ບັນຫາທີ່ຍັງຄົງຄ້າງບໍ່ສາມາດແກ້ໄຂໄດ້ແມ່ນເສັ້ນທາງ ແລະ ຕ້ານເຈື່ອນຍ້ອນງົບປະມານມີຈຳກັດ.

ສຳລັບວິທີການ ແລະ ມາດຕະການແກ້ໄຂໃນຕໍ່ໜ້າ ປະທານຄະນະ ສສຊ ເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ກ່າວວ່າ: ຈະສືບຕໍ່ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດ ໃຫ້ໄປຕາມຂັ້ນຕອນຂອງກົດໝາຍ; ພະຍາຍາມກະຕຸກຊຸກຍູ້ພາກສ່ວນກ່ຽວຂ້ອງ ໃຫ້ເປັນເຈົ້າການ ແລະ ມີຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງຕົນ ນັບທັງເຈົ້າຂອງໂຄງການ ແລະ ບໍລິສັດຜູ້ຮັບເໝົາກໍ່ສ້າງ; ຈະສືບຕໍ່ຄົ້ນຄວ້າຈັດຫາແຫຼ່ງທຶນ ເພື່ອສືບຕໍ່ຈັດຕັ້ງປະຕິບັດ; ປະສານສົມທົບກັບຂະແໜງການສູນກາງ ແລະ ທ້ອງຖິ່ນ ເພື່ອຊຸກຍູ້ພາກສ່ວນກ່ຽວຂ້ອງເພື່ອສືບຕໍ່ຈັດຕັ້ງປະຕິບັດບັນດາໂຄງການລົງທຶນ ໃຫ້ສຳເລັດຕາມແຜນການທີ່ກຳນົດໄວ້.

ໂອກາດດັ່ງກ່າວ, ທ່ານ ເຜິ້ງນິລັນ ຄຳພັນເຜິ້ງ ໃຫ້ຮູ້ກ່ຽວກັບແຜນການໃນຕໍ່ໜ້າ ເຊິ່ງຄະນະ ສສຊ ປະຈຳເຂດເລືອກຕັ້ງ ກໍຄື ສພຂ ໄຊຍະບູລີ ມີຄາດໝາຍສູ້ຊົນຄື: ສືບຕໍ່ຈັດຕັ້ງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສພຂ ຊຸດທີ II, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ແລະ ສພຂ ຢ່າງກວ້າງຂວາງ; ປັບປຸງກົນໄກປະສານງານ ລະຫວ່າງຄະນະ ສສຊ ປະຈຳເຂດເລືອກຕັ້ງ ກັບ ສພຂ, ອົງການປົກຄອງແຂວງ ໃຫ້ຮັດກຸມເພື່ອສາມາດເຄື່ອນໄຫວຕາມພາລະບົດບາດ; ສືບຕໍ່ປັບປຸງກົງຈັກການຈັດຕັ້ງ ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ໃຫ້ໜັກແໜ້ນເຂັ້ມແຂງ ເພື່ອປະຕິບັດພາລະບົດບາດ ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ຢູ່ເຂດເລືອກຕັ້ງເມືອງ; ດຳເນີນກອງປະຊຸມ ຄົບຄະນະ ປະຈຳປີຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ, ກອງປະຊຸມຄົບຄະນະ ຂອງບັນດາຄະນະກຳມະການ ສພຂ ກັບພະແນກການ, ອົງການຂອງແຂວງ; ສຸມໃສ່ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຊຸດທີ II ເພື່ອພິຈາລະນາບັນຫາສຳຄັນຂອງທ້ອງຖິ່ນ ພ້ອມທັງລົງພົບປະ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມ ໃຫ້ຜູ້ມີສິດເລືອກຕັ້ງ; ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງ, ການປະເມີນວາລະແຫ່ງຊາດຂອງບັນດາພະແນກການ, ອົງການພາຍໃນແຂວງ (ຕາມຄຳແນະນຳຂອງ ຄປຈສພຂ ເລກທີ 4); ສືບຕໍ່ເຂົ້າຮ່ວມການທາບທາມກົດໝາຍທີ່ບັນດາກະຊວງ ແລະ ພາກສ່ວນຕ່າງໆ ຈັດຂຶ້ນ; ສຸມໃສ່ເຄື່ອນໄຫວວຽກງານນຳຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ສສຊ ທີ່ເຄື່ອນໄຫວວຽກງານ ແລະ ເຮັດວຽກຢູ່ແຂວງໄຊຍະບູລີ; ສືບຕໍ່ເອົາໃຈໃສ່ຍົກລະດັບຄວາມຮູ້-ຄວາມສາມາດ ໃຫ້ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານ-ລັດຖະກອນ ໂດຍສະເພາະການຝຶກອົບຮົມ, ສຳມະນາໃນຫົວຂໍ້ຕ່າງໆ ທີ່ກ່ຽວພັນກັບວຽກງານສະພາ ເພື່ອສາມາດປະຕິບັດພາລະບົດບາດ ໃນການເປັນຕົວແທນຂອງປະຊາຊົນ; ສືບຕໍ່ພົວພັນ, ຮ່ວມມື ແລະ ເຂົ້າຮ່ວມກິດຈະກຳຕ່າງໆຂອງກຳມາທິການສະພາແຫ່ງຊາດ, ການພົວພັນຮ່ວມມືກັບບັນດາແຂວງແຮກສ່ຽວຂອງ ສສ. ຫວຽດນາມ ຕາມກົນໄກປະສານງານ ລະຫວ່າງແຂວງໄຊຍະບູລີ ກັບບັນດາແຂວງຕ່າງໆຂອງ ສສ.ຫວຽດນາມ.

## ຕ້ອນຮັບຄະນະຜູ້ແທນ ສະພາປະຊາຊົນແຂວງກີຢອງຊັ້ງນ່ຳ-ໂດ ສ.ເກົາຫຼີ



(ສພຊ) ເມື່ອທ້າຍປີ 2022 ຄະນະຜູ້ແທນສະພາປະຊາຊົນແຂວງ ກີຢອງຊັ້ງນຳ-ໂດ ສ.ເກົາຫຼີ ນຳໂດຍທ່ານ ຈອງ ກິວຮອນ ຮອງປະທານສະພາປະຊາຊົນແຂວງ ກີຢອງຊັ້ງນຳ-ໂດ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມສະພາປະຊາຊົນແຂວງວຽງຈັນ ໂດຍການຕ້ອນຮັບຂອງທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ ພ້ອມດ້ວຍບັນດາທ່ານຄະນະປະຈຳ, ສະມາຊິກສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ ແລະ ພະນັກງານວິຊາການພາຍໃນປະທານສະພາປະຊາຊົນແຂວງວຽງຈັນ.

ໃນພິທີພົບປະ, ທ່ານ ບຸນສອນ ເພັດລາວັນ ໄດ້ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງວຽງຈັນ ກ່າວຕ້ອນຮັບຄະນະຜູ້ແທນສະພາປະຊາຊົນແຂວງ ກີຢອງຊັ້ງນຳ-ໂດ ສ.ເກົາຫຼີ ທີ່ມາຢ້ຽມຢາມສະພາປະຊາຊົນແຂວງວຽງຈັນ. ພ້ອມນີ້, ທ່ານຍັງໄດ້ລາຍງານສະພາບລວມຂອງແຂວງ ແລະ ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງໂດຍຫຍໍ້. ຈາກນັ້ນ, ທ່ານ ຈອງ ກິວຮອນ ໄດ້ກ່າວສະແດງຄວາມຂອບໃຈປະທານສະພາປະຊາຊົນແຂວງວຽງຈັນ ພ້ອມດ້ວຍຄະນະ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນໃນຄັ້ງນີ້. ພ້ອມດຽວກັນນີ້, ຄະນະຜູ້ແທນສະພາປະຊາຊົນແຂວງ ກີຢອງຊັ້ງນຳ-ໂດ ສ.ເກົາຫຼີ ຍັງໄດ້ເຂົ້າຢ້ຽມຂ່ຳນັບເຈົ້າແຂວງແຂວງວຽງຈັນອີກດ້ວຍ.

ຕ້ອນທ້າຍຂອງກອງປະຊຸມ ທັງສອງຝ່າຍໄດ້ສະແດງຄວາມຂອບໃຈ ແລະ ອວຍພອນໃຫ້ການຢ້ຽມຢາມຄັ້ງນີ້ຈົ່ງປະສົບຜົນສຳເລັດຢ່າງຈົບງາມ ແລະ ຂໍອວຍພອນໃຫ້ຄະນະກັບຄືນປະເທດດ້ວຍຄວາມສະຫວັດດີພາບທຸກປະການ.

(ນັກຂ່າວ ສພຂ ວຽງຈັນ)

ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON
ວັນທີ 16-22/01/2023





# ກົດໝາຍ ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

**ພາກທີ II**

**ການຄຸ້ມຄອງອາວຸດ**

**ໝວດທີ 1**

**ປະເພດອາວຸດ**

**ມາດຕາ 8 ປະເພດອາວຸດ**

ປະເພດອາວຸດ ມີ ດັ່ງນີ້:

1. ອາວຸດເສິກ;
2. ອາວຸດກິລາ;
3. ອາວຸດພື້ນເມືອງ.

**ມາດຕາ 9 ອາວຸດເສິກ**

ອາວຸດເສິກ ແມ່ນ ປືນ, ລູກກະສູນ, ລູກລະເບີດ, ພາຫະນະ ຫຼື ລະບົບພາຫະນະ ແລະ ອາວຸດເສິກ ທຸກຊະນິດ ເປັນຕົ້ນ ປືນສັ້ນ, ປືນເຫຼັກຍາວ, ປືນກົນ, ປືນຄົກ, ປືນໃຫຍ່, ລູກສອນໄຟ, ຣາດາ, ລົດສູ້ຮົບ, ເຮືອບິນສູ້ຮົບ, ເຮືອບິນບໍ່ມີຄົນຂັບ ແລະ ເຮືອສູ້ຮົບ.

**ມາດຕາ 10 ອາວຸດກິລາ**

ອາວຸດກິລາ ແມ່ນ ປືນອັດລົມ, ປືນແວ່ງ ສັ້ນ-ຍາວ, ປືນສັ້ນ, ປືນເຫຼັກຍາວ, ປືນລູກຊອງ ແລະ ລູກກະສູນ ທີ່ມີຂະໜາດ, ຄວາມແຮງ ແລະ ດາບ, ທະນູ, ໜ້າເກັ້ງ, ຫຼາວ ແລະ ອາວຸດກິລາອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

**ມາດຕາ 11 ອາວຸດພື້ນເມືອງ**

ອາວຸດພື້ນເມືອງ ແມ່ນ ປືນແກ໋ບ, ປືນເພີງ, ປືນປະດິດ, ປືນດັດແປງ, ມີດແຫຼມ, ງ້າວ, ດາບ, ຫອກ, ພ້າ, ຂວານ, ໜ້າເກັ້ງ, ທະນູ, ຜຸເປົ່າລູກດອກ, ເລື່ອຍ, ສະນັບມື, ແຫຼມມື, ແຮ້ວ, ກັບດັກ, ຂວາກ, ຮ່າວ ແລະ ອາວຸດພື້ນເມືອງອື່ນ.

**ໝວດທີ 2**

**ການຄຸ້ມຄອງອາວຸດເສິກ**

**ມາດຕາ 12 ການຄຸ້ມຄອງອາວຸດເສິກໃນກຳລັງປ້ອງກັນຊາດ**

ກະຊວງປ້ອງກັນປະເທດ ເປັນຜູ້ຄຸ້ມຄອງອາວຸດເສິກ ໃນຂົງເຂດວຽກງານປ້ອງກັນຊາດຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍການ ຄວບຄຸມ, ຕິດຕາມ ກວດກາ ກ່ຽວກັບການ ຄົ້ນຄວ້າ ປະດິດ, ຜະລິດ, ສ້ອມແປງ, ປົກປັກຮັກສາ, ຈຳໜ່າຍ, ຈັດຊື້, ນຳເຂົ້າ, ສົ່ງອອກ, ກວດພິສູດ, ປະກອບ, ອະນຸຍາດ, ນຳໃຊ້ ແລະ ທຳລາຍ ອາວຸດເສິກ ລວມທັງ ຍຸດໂທປະກອນເຕັກນິກການທະຫານ ແລະ ເຄື່ອງມືຊ່ວຍໜູນ ໃນກຳລັງຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 13 ການຄຸ້ມຄອງອາວຸດເສິກ ໃນກຳລັງປ້ອງກັນຄວາມສະຫງົບ**

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງອາວຸດເສິກ ໃນຂົງເຂດວຽກງານປ້ອງກັນຄວາມສະຫງົບ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍການ ຄວບຄຸມ, ຕິດຕາມ ກວດກາ ກ່ຽວກັບການ ຄົ້ນຄວ້າ ປະດິດ, ຜະລິດ, ສ້ອມແປງ, ປົກປັກຮັກສາ, ຈຳໜ່າຍ, ຈັດຊື້, ນຳເຂົ້າ, ສົ່ງອອກ, ກວດພິສູດ, ປະກອບ, ອະນຸຍາດ, ນຳໃຊ້ ແລະ ທຳລາຍ ອາວຸດເສິກ ລວມທັງຍຸດໂທປະກອນເຕັກນິກ ແລະ ເຄື່ອງມືຊ່ວຍໜູນ ໃນກຳລັງປ້ອງກັນຄວາມສະຫງົບ ຢ່າງເຂັ້ມງວດ.

**ມາດຕາ 14 ການຄຸ້ມຄອງອາວຸດເສິກໃນສັງຄົມ**

ກະຊວງປ້ອງກັນປະເທດ ເປັນຜູ້ຄຸ້ມຄອງອາວຸດເສິກ ທີ່ປະກອບໃຫ້ ກຳລັງປ້ອງກັນຕົວ ແລະ ກຳລັງກອງຫຼອນຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍການ ຂຶ້ນທະບຽນ, ປະກອບ ຫຼື ອະນຸຍາດ ຖື, ນຳໃຊ້ ແລະ ຖອນອາວຸດເສິກ ຕາມລະບຽບການ.

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງອາວຸດເສິກ ທີ່ປະກອບໃຫ້ ເຈົ້າໜ້າທີ່ສືບສວນ-ສອບສວນ, ກຳລັງປ້ອງກັນພາຍໃນ ແລະ ກຳລັງປ້ອງກັນຕົວສຳນັກງານ ອົງການ, ກຳລັງປ້ອງກັນຄວາມສະຫງົບບ້ານ ແລະ ກຳລັງຮັກສາຄວາມປອດໄພຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍການຂຶ້ນທະບຽນ, ປະກອບ ຫຼື ອະນຸຍາດ ຖື, ນຳໃຊ້ ແລະ ຖອນ ອາວຸດເສິກ ຕາມລະບຽບການ.

**ມາດຕາ 15 ເປົ້າໝາຍຈະໄດ້ຮັບອະນຸຍາດປະກອບອາວຸດເສິກ**

ເປົ້າໝາຍຈະໄດ້ຮັບອະນຸຍາດປະກອບອາວຸດເສິກ ມີ ດັ່ງນີ້:

1. ກຳລັງປ້ອງກັນຊາດ ແລະ ກຳລັງປ້ອງກັນຄວາມສະຫງົບ;
2. ເຈົ້າໜ້າທີ່ສືບສວນ-ສອບສວນ;
3. ກຳລັງປ້ອງກັນພາຍໃນ ແລະ ກຳລັງປ້ອງກັນຕົວສຳນັກງານ-ອົງການ;
4. ກຳລັງປ້ອງກັນຕົວ ແລະ ກຳລັງກອງຫຼອນ;
5. ກຳລັງປ້ອງກັນຄວາມສະຫງົບບ້ານ ແລະ ກຳລັງຮັກສາຄວາມປອດໄພ.

ສຳລັບ ມາດຕະຖານ ແລະ ເງື່ອນໄຂຂອງເປົ້າໝາຍຈະໄດ້ຮັບອະນຸຍາດປະກອບອາວຸດເສິກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 ການນຳໃຊ້ອາວຸດເສິກ**

ອາວຸດເສິກ ໃຫ້ນຳໃຊ້ເຂົ້າໃນການປົກປັກຮັກສາເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ລວມທັງ ນ່ານນ້ຳ, ນ່ານຟ້າ, ຄວາມສະຫງົບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ປົກປ້ອງຊີວິດ, ສຸຂະພາບ, ຊັບສິນຂອງລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 17 ຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກອບອາວຸດເສິກ**

ຜູ້ໄດ້ຮັບການປະກອບອາວຸດເສິກ ມີຄວາມຮັບຜິດຊອບ ດັ່ງນີ້:

1. ນຳໃຊ້ໃຫ້ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້;
2. ບົວລະບັດຮັກສາຕາມເຕັກນິກ ແລະ ຄຸນນະພາບຂອງອາວຸດ;
3. ປົກປັກຮັກສາອາວຸດເສິກ ແລະ ບັດອະນຸຍາດຖືອາວຸດເສິກ ບໍ່ໃຫ້ຕົກເຮ່ຍເສຍຫາຍ;
4. ສົ່ງອາວຸດ ໃນກໍລະນີທີ່ມີການຖອນຄືນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້;
5. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ຈາກການນຳໃຊ້ອາວຸດທີ່ບໍ່ຖືກຕ້ອງຂອງຕົນ.

**ມາດຕາ 18 ການຖອນຄືນ ແລະ ເກັບກູ້ ອາວຸດເສິກ**

ອາວຸດເສິກ ຂອງຜູ້ໄດ້ຮັບການປະກອບ ຈະຖືກຖອນຕາມແຕ່ລະກໍລະນີ ດັ່ງນີ້:

1. ໄດ້ຮັບອຸດໜູນບຳນານ ຫຼື ບຳເນັດ;
2. ເສຍຊີວິດ;
3. ຖືກລົງວິໄນໄລ່ອອກຈາກກຳລັງປະກອບອາວຸດ;
4. ໄດ້ຮັບການປະກອບອາວຸດເສິກຊົ່ວຄາວ ພາຍຫຼັງປະຕິບັດໜ້າທີ່ສຳເລັດ;
5. ນຳໃຊ້ອາວຸດເສິກບໍ່ຖືກກັບເປົ້າໝາຍ, ດັດແປງສະພາບເຕັກນິກ ແລະ ຕົກເຮ່ຍເສຍຫາຍແຕ່ສາມາດຊອກຄືນໄດ້;
6. ອອກຈາກ ການເປັນເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ກຳລັງອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງກົດໝາຍສະບັບນີ້.

ອາວຸດເສິກ ທີ່ເສື່ອມຄຸນນະພາບ ຫຼື ບໍ່ສາມາດນຳໃຊ້ໄດ້ ແລະ ອາວຸດເສິກ ທີ່ບໍ່ແມ່ນຂອງເປົ້າໝາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງກົດໝາຍສະບັບນີ້ ຕ້ອງໄດ້ເກັບກູ້.

**ມາດຕາ 19 ການນຳເອົາອາວຸດເສິກ ເຂົ້າ-ອອກ ສປປລາວ**

ການນຳເອົາອາວຸດເສິກ ເຂົ້າ ສປປລາວ ຂອງຕ່າງປະເທດ ເພື່ອປ້ອງກັນການນຳ ທີ່ມາເຄື່ອນໄຫວ, ຢ້ຽມຢາມ, ເຮັດວຽກ, ເຂົ້າຮ່ວມກອງປະຊຸມ, ວາງສະແດງ, ຝຶກຊ້ອມ ຫຼື ກິດຈະກຳອື່ນ ຕ້ອງສະເໜີຜ່ານກະຊວງ ການຕ່າງປະເທດ ເພື່ອນຳສະເໜີຕໍ່ກະຊວງປ້ອງກັນປະເທດ ພິຈາລະນາອະນຸຍາດ ບົນພື້ນຖານການປະສານສົມ ທົບກັບກະຊວງປ້ອງກັນຄວາມສະຫງົບ ໃນການກວດກາບັນຊີ ແລະ ອາວຸດເສິກຕົວຈິງ ກ່ອນນຳເຂົ້າ ສປປລາວ.

ພາຍຫຼັງປະຕິບັດໜ້າທີ່ສຳເລັດແລ້ວຕ້ອງໄດ້ກວດກາເອົາອາວຸດເສິກທີ່ນຳເຂົ້າມານັ້ນ ອອກ ສປປລາວ ໃຫ້ຄົບຖ້ວນ ຫຼື ປະຕິບັດຕາມການຕົກລົງຂອງສອງລັດທີ່ກ່ຽວຂ້ອງ.

ການນຳເອົາອາວຸດເສິກ ອອກ ສປປລາວ ຂອງເຈົ້າໜ້າທີ່ ເພື່ອປ້ອງກັນການນຳຂອງປະເທດຕົນ ທີ່ໄປເຄື່ອນໄຫວ, ຢ້ຽມຢາມ, ເຮັດວຽກ, ເຂົ້າຮ່ວມກອງປະຊຸມ, ວາງ

ອ່ານຕໍ່ສະບັບໜ້າ...



ສຸກສະບາຍຫາຍໂລຄາ

# ໝາກໄມ້ລ້າງສານພິດ

**ແປ ແລະ ຮຽບຮຽງໂດຍ: ສາວແວ່ນ**

ການລ້າງສານພິດໃນຮ່າງກາຍ ອາຫານຖືວ່າເປັນຢາທີ່ດີທີ່ສຸດ ເປັນການກຳຈັດສິ່ງທີ່ບໍ່ດີອອກຈາກຮ່າງກາຍໂດຍວິທີທຳມະຊາດ ການເລືອກຮັບປະທານອາຫານ, ຜັກ ແລະ ໝາກໄມ້ ທີ່ມີຄຸນສົມບັດໃນການລ້າງສານພິດໃນຮ່າງກາຍກໍເປັນອີກໜຶ່ງທາງເລືອກທີ່ດີສຳລັບຄົນຮັກສຸຂະພາບ; ດັ່ງນັ້ນ, ໃນຄໍລຳສຸກສະບາຍຫາຍໂລຄາ ສະບັບນີ້ ເຮົາມີໝາກໄມ້ທີ່ມີຄຸນສົມບັດລ້າງສານພິດ



ອອກຈາກຮ່າງກາຍທີ່ຊອກຫາໄດ້ງ່າຍຕາມທ້ອງຕະຫຼາດມານຳສະເໜີ ເພື່ອເປັນອີກໜຶ່ງທາງເລືອກໃນການຮັກສາສຸຂະພາບ.

- **ໝາກໂປມ:** ມີເສັ້ນໃຍອາຫານຊ່ວຍເຮັດໃຫ້ລະບົບຍ່ອຍອາຫານເຮັດວຽກໄດ້ດີ ມີວິຕາມິນຊີ ແລະ ເສັ້ນໃຍໄຟເບີຊະນິດລະລາຍນ້ຳ ຈຶ່ງຊ່ວຍເພີ່ມປະສິດທິພາບໃນການຂັບຖ່າຍ ແລະ ຊ່ວຍປ້ອງກັນພະຍາດມະເຮັງລຳໄສ້ໃຫຍ່ໄດ້.

- **ໝາກຫຸ່ງສຸກ:** ເປັນຢາຊ່ວຍຂັບຖ່າຍອ່ອນໆ ຊ່ວຍແກ້ອາການເຈັບທ້ອງ, ລ້າງພິດໃນລຳໄສ້ໃຫຍ່ຈຶ່ງເຮັດໃຫ້ການຂັບຖ່າຍດີຂຶ້ນພ້ອມທັງຊ່ວຍເພີ່ມພູມຕ້ານທານຂອງຮ່າງກາຍໃຫ້ແຂງແຮງຂຶ້ນ.

- **ໝາກພຸກ:** ເປັນໝາກໄມ້ທີ່ມີສານເພກຕິກ ເຊິ່ງເປັນໄຟເບີສະນິດໜຶ່ງທີ່ຊ່ວຍຫຼຸດລະດັບຄໍເລດເຕີຣໍໃນເສັ້ນເລືອດ ແລະ ຍັງສາມາດປ້ອງກັນບໍ່ໃຫ້ສານເຄມີທີ່ເປັນທາດໂລຫະໜັກເຂົ້າໄປທຳລາຍຮ່າງກາຍ;

- **ໝາກລະແຊັງ:** ອຸດົມໄປດ້ວຍເກືອແຮ່ ແລະ ແຫຼ່ງພະລັງງານທີ່ຊ່ວຍບຳລຸງເລືອດ ຊ່ວຍສ້ອມແຊມ ແລະ ສ້າງເຊວໃນຮ່າງກາຍອີກທັງຍັງເຮັດໜ້າທີ່ເປັນສານຟອກລ້າງຕັບ, ໄຂ່ຫຼັງ, ລຳໄສ້ ແລະ ຜິວໜັງນຳອີກ.

- **ໝາກໂມ:** ຊ່ວຍຂັບປັດສະວະ, ຫຼຸດກາສະສົມຂອງກົດຢູລິກໃນໄຂ່ຫຼັງ ແລະ ກະເພາະປັດສະວະ; ໝາກໂມເປັນໝາກໄມ້ທີ່ມີລົດເຢັນ ຈຶ່ງເປັນໝາກໄມ້ທີ່ສາມາດລ້າງສານພິດໄດ້ດີ ແລະ ຊ່ວຍເພີ່ມຄວາມສົດຊື່ນໃຫ້ແກ່ຮ່າງກາຍ.

ຍັງມີພືດຜັກອີກຫຼາຍຊະນິດ ທີ່ສາມາດສ້າງພູມຕ້ານທານໃຫ້ແກ່ຮ່າງກາຍເຮົາໄດ້ ເຖິງວ່າອາຫານຈະມີປະໂຫຍດ ແຕ່ຫາກຮັບປະທານອາຫານບໍ່ສົມດູນກັບຄວາມຕ້ອງການຂອງຮ່າງກາຍກໍອາດຈະເຮັດໃຫ້ເກີດອັນຕະລາຍຕໍ່ຮ່າງກາຍໄດ້ ທາງທີ່ດີຄວນຮັບປະທານໃນປະລິມານທີ່ພໍດີ ໃສ່ໃຈເລື່ອງອາຫານການກິນໃຫ້ຫລາຍຂຶ້ນ ແລະ ອອກກຳລັງກາຍເປັນປະຈຳຢ່າງສະໝ່ຳສະເໝີກໍຈະຊ່ວຍໃຫ້ມີສຸຂະພາບທີ່ດີໄດ້.

ວາດ ກະວີລາວ

## ມູນເຊື້ອກອງທັບ

**# ໂດຍ: ສາຍນ້ຳອູ**

❊ ປະຊາລາວຈາລຶກໝັ້ນ
ບໍ່ມີໄລລືມຫຼົງ
ຫຼາຍຜົນງານສານສ້າງ
ຄຸນຄ່າຄົງຄູ່ໄວ້
ຝັງແນບໃນຊວງ
ລົບເລືອນລຶງໄດ້
ວິລະກຳສູງສົ່ງ
ຊາດລາວໄດ້ຈື່ຈຳ ແທ້ນາ!

❊ 20 ມັງກອນແມ່ນມື້
ກອງທັບລາດຊະວົງ
ຂານອາສາຕໍ່ສູ້
ເພື່ອປະຊາຊາດພີ່ນ້ອງ
ສານກໍ່ວິລະຊົນ
ອາດຫານແຮງກ້າ
ຍິນຍອມສະຫຼະຊີບ
ໄກພົ້ນຈາກມານ ຊອບແລ້ວ!

❊ ເຖິງວ່າແສນຍາກຫຍຸ້ງ
ບໍ່ເຄີຍຍອມຈຳນົນ
ອຸປະສັກຢາຍຂວາງໜ້າ
ລະເບີດລູກປືນກໍຜ່າມ້າງ
ລຳບາກກາຍໃຈ
ຕໍ່ສັດຕູໂຕຮ້າຍ
ຕົ້ນທາງກໍຕາມຊ່າງ
ປະສົງໄວ້ບ່ອນມີໄຊ ພຸ້ນແລ້ວ!

❊ ແມ່ນເສັ້ນທາງຕ່ຳຄ້ອຍ
ບຸປ່າພູດົງໜາ
ອາໄສນອນຕາມພື້ນ
ໃຈບໍ່ໄຫວຫວັ່ນທໍ້
ລົງຮ່ອມແຄມເຫວ
ຜ່ານລຳທານນ້ຳ
ທັງຢືນຍາມ ລງຄ່ຳ
ເກງຢ້ານຢ່າງໃດ

❊ ຫຼາຍສິບປີຕໍ່ສູ້
ສົມວ່າເປັນກອງທັບປະຊາຊົນລາວ
ເດີນຕາມການສອນຊີ້
ກອງທັບລາວເກັ່ງກ້າ
ມີທ່າໄຊຊະນະ
ເພື່ອປະຊາຊົນແທ້
ແນວທາງພັກເຍືອງສ່ອງ
ດັ່ງຄຳຍໍກ່າວຍ້ອງ
ລາວນ້ອຍພິກຂີ້ໜູ ແທ້ນາ!

❊ 74 ພັນສາ ວຽນພົບພໍ້
ໃຫ້ກອງທັບປະຊາຊົນລາວ
ເປັນຮົ້ວໜາລຽນລ້ອມ
ຄູ່ປະຊາຊາດເຊື້ອ
ຂໍສິ່ງພອນໄຊ
ຮຸ່ງເຮືອງໃສແຈ້ງ
ປະຄອງເມືອງລາວຢູ່
ເພື່ອແດນລາວລ້ານຊ້າງ
ຈະເລີນກ້າວຮຸ່ງເຮືອງ ນັ້ນແລ້ວ!



## ຜ້າຂາຍ ສະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

❊ ໜັງສືພິມ **“ຜູ້ແທນປະຊາຊົນ”** ໄດ້**ກຳເນີດ** ແລະ **ເດີນທາງ**ມາເຖິງ **ປີທີ 11 ສະບັບທີ 904** ແລະ ເພື່ອເຮັດໃຫ້ມີຄວາມງາມ ກະທັດຮັດ ແລະ ແປກໃໝ່ ສະນັ້ນ, ໃນເດືອນ**ມັງກອນ 2023** ເປັນຕົ້ນໄປ ທາງທີມງານໄດ້ມີການປັບປຸງຮູບແບບການຈັດວາງ **ຈາກ 8 ມາເປັນ 12 ໜ້າ** ໂດຍເຮັດເປັນລາຍສັບປະດາ ແລະ ຄາດວ່າຈະປິດໜ້າໃນທຸກໆທ້າຍອາທິດ **ຫລາຍຄໍລຳເກີດຂຶ້ນ** ປັບປຸງໃໝ່ຕາມແຜນ ເນັ້ນສະໜອງຂໍ້ມູນ ໃຫ້ປະຊາຊົນໄດ້**ຮັບຮູ້ກົດໝາຍ**ພ້ອມ **ປະຕິບັດເຄັ່ງຄັດ** ຝາກຕິດຕາມສິ່ງຂ່າວພ້ອມ ຊິປັບປຸງແກ້ປ່ຽນແປງ **ທ່ານເອີຍ!**

❊ **18 ເຂດເລືອກຕັ້ງ**ທົ່ວປະເທດພອມລີເລັ້ມ ກະກຽມໃສ່ກອງປະຊຸມ ສະໄໝສາມັນ**ເທື່ອທີ 4** ຕາມແຜນຄາດວາງເອົາໄວ້ ໃນນັ້ນ, **ນະຄອນຫລວງວຽງຈັນໄດ້ ປະຕິບັດກ່ອນໝູ່** ຂົມລຳດັບຊື່ເອີ້ນ ເປັນ**ເຂດ 1** ຍ່ອມເຮັດໄດ້ ໄວວາແທ້ກ່ອນໃຜ ຕິດຕາມໄປຈາກນັ້ ຊິມີເຂດແຂວງໃດ ຈັດຕໍ່ໄປເປັນອັນດັບສອງ ສ່ອງວຽກງານໃນນັ້ນ ບັນຫາໃດຍົກມາເວົ້າ ພິຈາລະນາຮອງຮັບ ຈັບຕາແບນສ່ອງສົ້ງ **ບັນຫາພົ້ນເດັ່ນດັງ ນັ້ນແລ້ວ!**

## ຊອບຍິ້ມ

**# ແອ່ນຕຸ້ງ**



**ເລື່ອງ: ຫາຍສົງໄສ**

ທີ່ໂຮງໝໍບຳບັດຜູ້ປ່ວຍທາງຈິດ ນາຍໝໍໄດ້ທົດສອບຄົນເຈັບ ວ່າເປັນເຖິງຂັ້ນໃດ, ລາວໄດ້ແຕ້ມຮູບລົດທີ່ພອນໄຂປະຕູໃສ່ກະດານ ແລ້ວບອກເຂົາເຈົ້າຂຶ້ນໄປ, ຄົນເຈັບພາກັນຍາດກັນໂດດເຂົ້າໄປໃນລົດ ຍັງເຫລືອພຽງໜຶ່ງຄົນທີ່ຢືນເສີຍຢູ່, ທ່ານໝໍສົງໄສ ແລະ ຄິດວ່າຄົນເຈັບຜູ້ນີ້ຄົງຈະຫາຍດີເປັນປົກກະຕິແລ້ວ ກໍເລີຍຖາມວ່າ:

**ທ່ານໝໍ:** ວ້າວ! ເປັນຫຍັງຄືບໍ່ເຂົ້າລົດນຳໝູ່?

**ຄົນເຈັບຄົນນັ້ນ:** ຂ້ອຍຊິຍາດເຂົ້າໄປເຮັດຫຍັງ ພວກບ້ານັ້ນ ບໍ່ຮູ້ຕິວ່າກະແຈລົດຢູ່ນຳຂ້ອຍ

**ທ່ານໝໍ:** !!!

## ຄະຕິເຕືອນໃຈ

**# ດອກຂະຍອມ**

ເພັດດີໃຫ້ເບິ່ງທີ່ຫລ່ຽມ
ແພດີໃຫ້ເບິ່ງທີ່ລາຍ
ດອກໄມ້ດີໃຫ້ເບິ່ງທີ່ສີ
ຄົນດີໃຫ້ເບິ່ງທີ່ການກະທຳ

ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON






# ປີໃໝ່ ຄວາມສຸກຫຼາຍຂຶ້ນ ຫຼື ຄວາມທຸກຫຼາຍຂຶ້ນ?

# ດົ້ນກິບເມກ

ຄວາມສຸກຂອງຄົນ ຖ້າເວົ້າໂດຍລວມໃນຖານະທີ່ເປັນມະນຸດດ້ວຍກັນ ຄືຈະແມ່ນສຸຂະພາບດີ, ການເປັນຢູ່ບໍ່ຝືດເຄືອງ-ບໍ່ເປັນໜີ້ ເຖິງຍາມກິນໄດ້ກິນ ເຖິງຍາມນອນໄດ້ນອນ, ບາງປະເທດໃນອາຊີ ໃຊ້ການວັດດັດຊະນີຄວາມສຸກຂອງປະຊາຊົນ ເພື່ອບົ່ງບອກເຖິງການຂະຫຍາຍຕົວທາງດ້ານເສດຖະກິດເຊັ່ນ: ປະເທດພູຖານໃຊ້ GNH ແທນ GDP ຜູ້ຂຽນຄິດວ່າເຂົາພັດທະນາປະເທດຄືຈະຮູ້ຊຶ້ງຄຳວ່າກະຈຸກຈິນກະຈາຍ.

ອີງຕາມການລາຍງານຂອງແຫຼ່ງຂ່າວຕ່າງປະເທດລະບຸວ່າ ຈາກປີ 2012-2017 ດັດຊະນີປະເທດທີ່ມີຄວາມສຸກອັນດັບໜຶ່ງ ແມ່ນປະເທດເດັ່ນມາກ (Denmark) ແລະ ຕໍ່ຈາກນີ້ສີ່ປີ ປະເທດທີ່ມີຄວາມສຸກມາຈາກນະໂຍບາຍພັດທະນາປະເທດທີ່ມຸ່ງເອົາໃຈໃສ່ສະພາບຄວາມເປັນຢູ່ຂອງປະຊາຊົນລະດັບວັດທະນະທຳ-ສັງຄົມ, ສະຫວັດດີການ, ທັດສະນະຄະຕິ (ນະໂຍບາຍ) ກົນໄກຄຸ້ມຄອງມະຫາພາກ... ລ້ວນແຕ່ແມ່ນປັດໄຈສ້າງຊີວິດທີ່ມີຄວາມສຸກຂອງປະເທດເຫຼົ່ານັ້ນ.

ແຫຼ່ງຂ່າວວາລະສານກອມມູນິດຫວຽດນາມ 10/6/2022, ເອກະສານກອງປະຊຸມໃຫຍ່ຄັ້ງທີ 13 ຂອງພັກກອມມູນິດຫວຽດນາມ ໄດ້ກຳນົດຄວາມສຸກເປັນເປົ້າໝາຍແຫ່ງການສູ້ຊົນອີງໃສ່ປະຊາຊົນເພື່ອກໍ່ສ້າງພັກ, ຖືເອົາຄວາມສຸກຄວາມສຳລານຂອງປະຊາຊົນເປັນເປົ້າໝາຍແຫ່ງການສູ້ຊົນ, ປັບປຸງ ແລະ ເພີ່ມທະວີຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ພັກ ແລະ ລັດ ແລະ ລະບອບສັງຄົມນິຍົມ, ອີງໃສ່ບົດຄວາມໃນວາລະສານດັ່ງກ່າວ ແມ່ນມີເນື້ອໃນການບຸກທະລຸຍຸດທະສາດການພັດທະນາຂອງປະເທດຄື ມຸ່ງສູ່ເປົ້າໝາຍແຫ່ງຄວາມສຸກ, ພັດທະນາມະນຸດຢ່າງຮອບດ້ານ, ສ້າງວັດທະນະທຳຫວຽດນາມກ້າວໜ້າ ແລະ ເຕັມໄປດ້ວຍເອກະລັກຂອງຊາດ.

ສັງລວມວ່າ: ຄວາມສຸກຂອງຄົນເຮົາ ຈະມຸ່ງພຽງອວດໂຊວັດຖຸລາຄາແພງ ຫຼື ວ່າເຮົາຈະເນັ້ນເອກະລັກວັດທະນະທຳທີ່ເປັນຈິດວິນຍານຄວາມເປັນຊາດ, ຮີດຄອງປະເພນີມາກ່ອນ ວັດທະນະທຳສາກົນມາທີ່ຫຼັງ, ຄິດວ່າ ຖ້າເຮົາຂາດຄວາມເອົາໃຈໃສ່ ກໍຈະເຮັດໃຫ້ຮີດຄອງເສົ້າໝອງ!



- **ລຶກ:** ແປວ່າ ເວລາ ເຊິ່ງພໍດີທີ່ເປັນໂຊຍະມຸງຄຸນ. ຖ້າຈະຈັດຢູ່ໃນຕຳລາໂຫລະສາດຈະແປວ່າດາວເນ້ະ. ດາວນົບພະເຄາະ ຫຼື ດາວທີ່ມີລັກສະນະເປັນໝູ່ (ໝູ່ດາວ) ທີ່ສາມາດແຜ່ລັດສະໝີອອກໄປໄດ້ຮອບຕົວ ຮຽກວ່າ "ດາວລຶກ" ສະນັ້ນ ໝໍພອນ ຫຼື ໝໍສູດຂວັນ ຈຶ່ງເວົ້າວ່າ: "ລຶກງາມ" ຫຼື ລຶກງາມຍາມດີ ເຊິ່ງເປັນເວລາໂຊຍະມຸງຄຸນ ຫຼື ສິຣິມຸງຄຸນ ເຊິ່ງຈະໝາຍເຖິງລຶກງາມຍາດີ ນັ້ນເອງ.

**ລຶກ** ເປັນສັບພາສາສັນສະກຣິດ. ພາສາຂອງຄົນອິນເດຍບູນຮານທີ່ໃຊ້ຢູ່ທາງພາກເໜືອ (ລຶກ-ບໍ່ແມ່ນລືກ).

# ກາວິນເນ

# ບັ້ນຮົບປ້ອງກັນທີ່ໝັ້ນສອງແຂວງເຕົ້າໂຮມ

# ໂດຍ: ທອມບໍ່ເຫີຍ



ເນື່ອງໃນໂອກາດ ວັນສ້າງຕັ້ງກອງທັບປະຊາຊົນລາວ ອັນເປັນປະຫວັດສາດຂອງຊາດ ຄົບຮອບ 74 ປີ (20/1/1949-20/1/2023) ທີ່ຈະໝູນວຽນມາບັນຈົບໃນມໍ່ໆນີ້, ໜັງສືພິມຜູ້ແທນປະຊາຊົນ ມີຂໍ້ມູນເພີ່ມເຕີມ ກ່ຽວກັບບັ້ນຮົບປ້ອງກັນເຂດທີ່ໝັ້ນ ສອງແຂວງເຕົ້າໂຮມ (ຫົວພັນ ແລະ ຜົ້ງສາລີ) ມານຳສະເໜີຕໍ່ບັນດາທ່ານຜູ້ອ່ານ.

ໃນສັນຍາເຊີແນວ ປີ 1945 ໄດ້ຮັບຮອງວ່າ "ຝ່າຍປະເທດລາວ" ແມ່ນກຳລັງການເມືອງເອກະລາດ ຖືກກົດໝາຍ ແລະ ມີທະຫານ, ມີເຂດເຕົ້າໂຮມຂອງຕົນ ຢູ່ສອງແຂວງ ຄື ຫົວພັນ ແລະ ຜົ້ງສາລີ; ຈາກນັ້ນ, ບັນດາທະຫານຝ່າຍປະເທດລາວ ທີ່ແຈກຢາຍຢູ່ແຕ່ລະເຂດໃນທົ່ວປະເທດ ໄດ້ເລີ່ມເຄື່ອນທັບ ແຕ່ເດືອນສິງຫາປີ 1954 ຂຶ້ນໄປເຕົ້າໂຮມຢູ່ສອງແຂວງ ຄື ຫົວພັນ ແລະ ຜົ້ງສາລີ ຈົນຮອດເດືອນພະຈິກ 1954 ບັນດາກົມກອງໄດ້ໄປຮອດສອງແຂວງເຕົ້າໂຮມ. ລັດຖະບານວຽງຈັນ ໄດ້ລະເມີດຂໍ້ກຳນົດຂອງສັນຍາເຊີແນວປີ 1954 ຢ່າງເປີດແປນ ໃນເດືອນມີນາປີ 1955 ພວກຈັກກະພັດອາເມລິກາ ໄດ້ລະດົມກຳລັງທະຫານຫຸ່ນຝ່າຍວຽງຈັນ 10 ກອງພັນ (2/3 ຂອງກຳລັງຫຼວງ) ປະກອບອາວຸດທີ່ທັນສະໄໝ ເປີດບັ້ນບຸກໂຈມຕີເຂົ້າສອງແຂວງເຕົ້າໂຮມ, 11 ກອງຮ້ອຍທະຫານທີມ (ຄອມມັງໂດ) ພ້ອມກັບໜ່ວຍກອງປຸ້ນ ທີ່ເປັນຄົນໃນທ້ອງຖິ່ນພາຍໃຕ້ການບັນຊາຂອງ "ຄະນະບັນຊາເຄື່ອນທັບເຂດຊຳເໜືອ" ໄດ້ດຳເນີນການເຊື່ອມກຳລັງ ຍຶດບຸກຕີເຂົ້າແຂວງຫົວພັນຢ່າງບັງອາດ ແລະ ຕັ້ງທັບຢ່າງຜິດກົດໝາຍຢູ່ 13 ຈຸດທີ່ສຳຄັນ. ນອກນັ້ນ, ພວກເຂົາຍັງສົ່ງພວກນັກສືບໃຕ້ດິນ, ພວກປຸ້ນແຊກຊຶມເຂົ້າ 131 ບ້ານ ໃນຈຳນວນທັງໝົດ 974 ບ້ານ ຂອງແຂວງຫົວພັນ ສ່ວນກຳລັງຂອງຝ່າຍເຮົາມີ 3 ກອງພັນນ້ອຍ, 5 ກອງຮ້ອຍເອກະລາດ, 4 ກອງຮ້ອຍທະຫານທ້ອງຖິ່ນ ແລະ 4 ໝວດຂອງກອງປັດໄຈ, ນອກນັ້ນ ຍັງມີທະຫານລາດກອງຫຼອນເຂົ້າຮ່ວມ ຈຳນວນ 1.000 ກວ່າຄົນ.

ຢູ່ແຂວງຜົ້ງສາລີ ສັດຕູໄດ້ເຕົ້າໂຮມເອົາ 3 ກອງພັນທະຫານຫຼວງ, 5 ກອງຮ້ອຍທະຫານທີມ (ຄອມມັງໂດ) ແລະ ພວກປຸ້ນໃນທ້ອງຖິ່ນ 300 ຄົນ ພ້ອມກັບພວກກົກມິນຕັງ 300 ຄົນ (ທະຫານເສດເຫຼືອຂອງຈຽງໄຄເຊັກ) ໂດຍແມ່ນກົມເສນາທິການ ທະຫານຝ່າຍຂວາ ເປັນຜູ້ບັນຊາໂດຍກົງ ເພື່ອກຽມການຊ່ວຍໝູນ ສັດຕູຍັງໄດ້ຈັດວາງສອງກອງພັນນ້ອຍຕັ້ງທັບຢູ່ບ້ານຫາດນາງ ແລະ ສົບຈາຍ (ຫຼວງພະບາງ) ສ່ວນຝ່າຍເຮົາ ມີກຳລັງ 1 ກອງພັນນ້ອຍທະຫານຫຼວງ, 2 ກອງພັນນ້ອຍທະຫານແຂວງ, ກຳລັງໄຟຊ່ວຍໝູນ 1 ກອງຮ້ອຍ, ທະຫານທ້ອງຖິ່ນ 5 ເມືອງມີ 5 ໝວດ ລວມທັງໝົດ 1.000 ກວ່າຄົນເຂົ້າຮ່ວມສູ້ຮົບ.

ການບຸກໂຈມຕີບຽດຍຶດຂອງພວກສັດຕູ ໃນແຕ່ລະຄັ້ງ ລ້ວນແຕ່ຖືກກອງທັບ ແລະ ປະຊາຊົນເຮົາຢູ່ 2 ແຂວງ ຕີຕ້ານຄືນຢ່າງອົງອາດກ້າຫານ ເຮັດໃຫ້ກຳລັງຂອງສັດຕູ ທີ່ມີກຳລັງພົນ, ພາຫະນະເຕັກນິກທີ່ເໜືອກວ່າພວກເຮົາ ຖືກດັບສູນ ແລະ ຖືກທຳລາຍຢ່າງໜັກ ໃນທີ່ສຸດ ພວກເຮົາກໍຕີຕ້ານຍຸດທະສາດບຸກລຸກບຽດຍຶດເອົາສອງແຂວງເຕົ້າໂຮມຂອງພວກຈັກກະພັດອາເມລິກາ ແລະ ລູກມືຂາຍຊາດ ໃຫ້ປະລາໄຊຢ່າງເຈັບແສບ.

ສະຫຼຸບແລ້ວ ນັບແຕ່ເດືອນຕຸລາປີ 1954 ເຖິງເດືອນສິງຫາ 1956 ທະຫານຝ່າຍຂວາວຽງຈັນ ໄດ້ດຳເນີນການບຸກໂຈມຕີທັງໃຫຍ່ ແລະ ນ້ອຍເຂົ້າແຕ່ລະເຂດຂອງສອງແຂວງເຖິງ 685 ຄັ້ງ ການບຸກໂຈມຕີຂອງພວກເຂົາສ່ວນໃຫຍ່ ໄດ້ຖືກສະກັດກັ້ນ ແລະ ຕີຖອຍ, ພວກເຂົາຖືກຂ້າຕາຍ ແລະ ບາດເຈັບ 5.000 ກວ່າຄົນ, ພວກເຮົາສາມາດປົກປັກຮັກສາເຂດເຕົ້າໂຮມສອງແຂວງໄວ້ໄດ້ ແລະ ສ້າງໃຫ້ກາຍເປັນເຂດທີ່ໝັ້ນ ນັບມື້ນັບເຂັ້ມແຂງ ຂອງການປະຕິວັດໃນທົ່ວປະເທດ.

ຍ້ອນພວກເຂົາຖືກປະລາໄຊຢ່າງໜັກໜ່ວງ ໃນການບຸກໂຈມຕີທາງດ້ານການທະຫານເຂົ້າສອງແຂວງເຕົ້າໂຮມ ຍ້ອນຖືກປະຊາຊົນທົ່ວປະເທດຄັດຄ້ານ ແລະລູກມືຊຸດທຳອິດຂອງອາເມລິກາ ຈຳຕ້ອງລາອອກຈາກຕຳແໜ່ງ ແລະ ຈັດຕັ້ງລັດຖະບານຊຸດໃໝ່ຂຶ້ນ ນຳໄປສູ່ການເຈລະຈາສ້າງຄວາມປອງດອງຊາດ ໃນວັນທີ 27/11/1957 ລັດຖະບານປະສົມໄດ້ຮັບການສ້າງຕັ້ງຂຶ້ນ (ລວມລາວຄັ້ງທີ 1).




# ສ່ຳ–ຊ່ຳ

'ສ່ຳ' ແລະ 'ຊ່ຳ' ເປັນສອງຄຳທີ່ມີສຽງຄືກັນ ຫຼືເອີ້ນວ່າຄຳພ້ອມສຽງ. ຢູ່ໃນວັດຈະນານຸກົມພາສາລາວສະບັບຕ່າງໆປາກົດເຫັນແຕ່ຄຳວ່າ 'ສ່ຳ' ທີ່ເປັນສາມປະເພດຄຳ ແລະມີສາມຄວາມໝາຍ:

'ສ່ຳ' ທີ່ເປັນຄຳນາມ ໝາຍເຖິງ "ພວກ, ໝູ່, ຂະໜາດ, ຮຸ່ນຮາວ" ເຊັ່ນ

- ພວກຜູ້ສາວສ່ຳນ້ອຍພວມພາກັນຫຼິ້ນໄລ່ຢູ່ເທິງຫາດຊາຍ.
- ພວກເຮົາເປັນໝູ່ຮຸ່ນສ່ຳດຽວກັນ.
- ສ່ຳເງິນຫ້າແສນ ລາວຈ່າຍໄດ້ຢ່າງສະບາຍ.

'ສ່ຳ' ທີ່ເປັນຄຳວິເສດ ໝາຍເຖິງ "ທໍ່, ເທົ່າ" ເຊັ່ນ

- ລາວອາຍຸສ່ຳກັບຂ້ອຍ.
- ພວກເຮົາສູງສ່ຳກັນ.
- ດຽວນີ້ດວງເຮັງມີຖານະສ່ຳກັບເສດຖີແລ້ວ!

'ສ່ຳ' ທີ່ເປັນຄຳກິລິຍາ ໝາຍເຖິງ "ເວົ້າຄ່ອຍໆ ແລະ ໃກ້ຫູຜູ້ຟັງ" ເຊັ່ນ

- ລາວສ່ຳໃສ່ຫູຂ້ອຍວ່າ ມື້ແລງຊິພາຂ້ອຍໄປກິນເຝີ.
- ນ້ອງຊາຍມັກເວົ້າສ່ຳໃສ່ຫູແມ່ເພື່ອຂໍເງິນ.

ສ່ວນຄຳວ່າ 'ຊ່ຳ' ບໍ່ປາກົດເຫັນຢູ່ໃນບັນດາວັດຈະນານຸກົມສະບັບໃດເລີຍ ແຕ່ປາກົດເຫັນຢູ່ໃນປຶ້ມໄວຍາກອນລາວສະບັບຂອງທ່ານພູມີ ວົງວິຈິດ ປີ 1967 ທີ່ສົມທຽບໃສ່ກັບ 'ສ່ຳ' ໃນຂໍ້ຫຼັກຕົວອັກສອນ ຄຳໃຊ້ອັກສອນສູງ ແລະ ຄຳໃຊ້ອັກສອນຕ່ຳ.

ໃນຄຳໃຊ້ອັກສອນສູງ 'ສ່ຳ' ມີຕົວຢ່າງຄຳວ່າ ສ່ຳໃດ, ລະສ່ຳລະສາຍ ແລະໃນຄຳໃຊ້ອັກສອນຕ່ຳ 'ຊ່ຳ' ມີຕົວຢ່າງຄຳວ່າ ຊ່ຳກ້າ, ຊ່ຳພິງ, ຊ່ຳຕົມ.

ຈາກການສຳພາດຜູ້ທີ່ເປັນຄົນທ້ອງຖິ່ນຊຽງຂວາງໄດ້ໃຫ້ຄວາມໝາຍຂອງສາມຕົວຢ່າງດັ່ງກ່າວ: ຊ່ຳກ້າ ໝາຍເຖິງ "ເອົາກ້າໄປແຊ່", ຊ່ຳພິງ ໝາຍເຖິງ "ແຊ່ຂີ້ຕົມ" ແລະ ຊ່ຳຕົມ ໝາຍເຖິງ "ແຊ່ຕົມ". ສະຫຼຸບແລ້ວ ຊ່ຳ ໃນພາສາຖິ່ນຊຽງຂວາງກໍໝາຍເຖິງ "ແຊ່" ຫຼື "ຊຳ" ທີ່ມີບັນທຶກໄວ້ໃນວັດຈະນານຸກົມພາສາລາວ ສະບັບ ປອ. ທອງຄຳ ອ່ອນມະນີສອນ ປີ 2022 ທີ່ໃຫ້ຄວາມໝາຍຂອງຄຳ 'ຊຳ' ວ່າ "ແຊ່", ແຊ່ໄວ້ໃນນ້ຳ ຫຼືບ່ອນຊຸ່ມ, ນອນແຊ່ຢູ່ໃນນ້ຳຫຼືຕົມ ເອີ້ນ "ຊຳນ້ຳ".

ຈາກຄວາມໝາຍຂອງ'ຊ່ຳ' ທີ່ກ່າວມາຂ້າງເທິງສົມທົບໃສ່ການໃຫ້ຕົວຢ່າງຂອງທ່ານ Khottavong David Kieng: "ຝົນຕົກຊຸ່ມຊ່ຳໃນ ຊື່ນຊ່ຳໃຈ" ແລະປາກົດເຫັນໃຊ້ໃນບົດເພງ 'ຫອມກຸຫຼາບປາກເຊ' ທີ່ມີວັກໜຶ່ງຮ້ອງວ່າ "ຂ້ອນຟ້າຢາດຝົນຊຸ່ມຊ່ຳໃນ ເພື່ອວ່າສອງດວງໃຈໄດ້ຊື່ນສຸຂີ", ເຮົາສາມາດໃຫ້ນິຍາມ 'ຊ່ຳ' ທີ່ເປັນປະເພດຄຳວິເສດວ່າ "ຊຸ່ມຊື່ນ, ຊຸ່ມດ້ວຍນ້ຳ" ແລະເປັນຄຳທີ່ມັກຊ້ອນທ້າຍໃຫ້ຄຳວ່າ 'ຊຸ່ມ' ເປັນ 'ຊຸ່ມຊ່ຳ'.




ເພີ່ນວ່າ ຄົນເຮົາມີເວລາທີ່ ດ້ອຍກັນທຸກຄົນ ແຕ່ບໍ່ມີໃຜທີ່ຕະຫຼອດໄປ ຈົ່ງທຳໃຈໃຫ້ສະຫງົບ ແລະ ຫັນໜ້າເຂົ້າຫາກັນ.




# ທະນາຄານໂລກປັບຫຼຸດຕົວເລກຄາດຄະເນເສດຖະກິດທົ່ວໂລກປີ 2023




ອີງຕາມການລາຍງານຂ່າວ ໃຫ້ຮູ້ວ່າ: ໜັງສືພິມວໍລ໌ສະຕຣິດເຈີໂນ ໃນວັນທີ 10 ມັງກອນ 2023 (ຕາມເວລາທ້ອງຖິ່ນ) ໄດ້ລາຍງານວ່າ: ທະນາຄານໂລກໄດ້ປັບຫຼຸດຕົວເລກຄາດຄະເນການເຕີບໂຕດ້ານເສດຖະກິດທົ່ວໂລກໃນປີ 2023 ລົງຢ່າງຂະໜາດໃຫຍ່.

ທະນາຄານໂລກ ໄດ້ມີການຄາດຄະເນວ່າ: ໃນປີ 2023 ການເຕີບໂຕດ້ານເສດຖະກິດຂອງໂລກຈະຫຼຸດລົງເປັນ 1,7%, ຕ່ຳກວ່າ 3% ເຊິ່ງເປັນຕົວເລກທີ່ຄາດຄະເນໄວ້ໃນເດືອນມິຖຸນາ 2022 ຜ່ານມາ. ພ້ອມນັ້ນ, ອີງຕາມຂໍ້ມູນຕົວເລກຂອງທະນາຄານໂລກໃຫ້ຮູ້ວ່າ, ປີນີ້ຈະເປັນປີທີ່ມີຈັງຫວະການເຕີບໂຕດ້ານເສດຖະກິດທົ່ວໂລກຊ້າອັນດັບ 3 ໃນຮອບ 30 ປີຜ່ານມາ ເຊິ່ງຖັດຈາກການຊຸດໂຊມທາງດ້ານເສດຖະກິດທີ່ເກີດຂຶ້ນໃນປີ 2009 ແລະ 2020.

ບົດລາຍງານອີກສະບັບໜຶ່ງ ສະແດງໃຫ້ເຫັນວ່າ: ເຖິງວ່າສະພາບໄພເງິນເຟີ້ທົ່ວໂລກເລີ່ມຜ່ອນຄາຍລົງແລ້ວກໍຕາມ, ແຕ່ຍັງຢູ່ໃນລະດັບສູງເປັນປະຫວັດສາດ. ນອກນີ້, ສະພາບໄພເງິນເຟີ້ສູງ, ການເພີ່ມຂຶ້ນຂອງອັດຕາດອກເບ້ຍ, ການຫຼຸດລົງດ້ານການລົງທຶນ, ບັນຫາ ແລະ ປັດໄຈອື່ນໆ ໄດ້ກາຍເປັນໄພຂົ່ມຂູ່ຕໍ່ການເຕີບໂຕດ້ານເສດຖະກິດໂລກ.

**ແຫລ່ງຂ່າວ: CRI**

# WHO ຮຽກຮ້ອງໃຫ້ຜູ້ເດີນທາງໃສ່ຜ້າອັດປາກ-ດັງ ຍ້ອນໂຄວິດສາຍພັນໃໝ່ລະບາດ



ເຈົ້າໜ້າທີ່ອົງການອະນາໄມໂລກ (WHO) ກ່າວໃນວັນທີ 10 ມັງກອນວ່າ: ປະເທດຕ່າງໆຄວນແນະນຳໃຫ້ຜູ້ໂດຍສານໃສ່ຜ້າປິດປາກໃນຖ້ຽວບິນໄລຍະໄກ ເນື່ອງຈາກການແຜ່ລະບາດຢ່າງວ່ອງໄວຂອງເຊື້ອໂອມິຄຣອນສາຍພັນຍ່ອຍຫລ້າສຸດຂອງໄວຣັສໂຄວິດ-19 ໃນອາເມລິກາ.

ເຈົ້າໜ້າທີ່ຂອງ WHO ແລະ ເອີຣົບລະບຸໃນຖະແຫລງຂ່າວວ່າ: ໃນເອີຣົບມີການກວດພົບເຊື້ອສາຍພັນ XBB.1.5 ເຊິ່ງເປັນສາຍພັນຍ່ອຍຂອງໂອມິຄຣອນ ເຖິງວ່າຈະພົບຈຳນວນໜ້ອຍແຕ່ໂຕເລກຜູ້ຕິດເຊື້ອກໍເພີ່ມຂຶ້ນເລື້ອຍໆ.

ທ່ານ ນາງ ແຄດເທີຣິນ ສະມໍວູດ ເຈົ້າໜ້າທີ່ສຸກເສີນອາວຸໂສຂອງອົງການອະນາໄມໂລກປະຈຳເອີຣົບ ກ່າວວ່າ: "ຜູ້ໂດຍສານຄວນໃສ່ຜ້າອັດປາກ-ດັງໃນສະຖານທີ່ທີ່ມີຄວາມສ່ຽງສູງ ເຊັ່ນ ຖ້ຽວບິນໄລຍະໄກ, ນີ້ຄວນເປັນຄຳແນະນຳທີ່ແຈ້ງຜູ້ໂດຍສານທີ່ມາຈາກທຸກບ່ອນທີ່ມີເຊື້ອໂຄວິດ-19 ແຜ່ລະບາດ".

ເຈົ້າໜ້າທີ່ສາທາລະນະສຸກກ່າວວ່າ: ໃນອາທິດທຳອິດຂອງປີນີ້ XBB.1.5 ເປັນສາຍພັນຍ່ອຍຂອງໂອມິຄຣອນທີ່ກວດພົບໄດ້ຫລາຍທີ່ສຸດ ມີອັດຕາສ່ວນ 27,6% ຂອງຜູ້ຕິດເຊື້ອໂຄວິດ-19 ໃນອາເມລິກາ.

ນາງ ສະມໍວູດ ກ່າວວ່າ: ປະເທດຕ່າງໆຈຳເປັນຕ້ອງເບິ່ງຫລັກຖານການກວດຫາເຊື້ອກ່ອນອອກເດີນທາງ ແລະ ຖ້າມາດຕະການດ້ານການເດີນທາງໄດ້ຮັບການພິຈາລະນາຄວນດຳເນີນງານໃນລັກສະນະທີ່ບໍ່ເລືອກປະຕິບັດ. ທ່ານຍັງກ່າວອີກວ່າ: ນັ້ນບໍ່ໄດ້ໝາຍຄວາມວ່າ WHO ແນະນຳໃຫ້ກວດເຊື້ອຜູ້ໂດຍສານຈາກອາເມລິກາໃນເວລານີ້.

ທັງນີ້, ມາດຕະການທີ່ອາດນຳມາໃຊ້ໄດ້ແກ່ການໃຊ້ຂໍ້ມູນຈີໂນມໃນການເຝົ້າລະວັງ ທັງນີ້ ມາດຕະການທີ່ອາດນຳມາໃຊ້ໄດ້ແກ່ການໃຊ້ຂໍ້ມູນຈີໂນມໃນການເຝົ້າລະວັງ ແລະ ການກວດເຊື້ອຜູ້ໂດຍສານຈາກປະເທດອື່ນໆ ຕາບໃດທີ່ບໍ່ສົ່ງຜົນກະທົບຕໍ່ລະບົບການເຝົ້າລະວັງພາຍໃນປະເທດ.

**ແຫຼ່ງຂ່າວ: LAOPHATTANA**

# ປະທານສະພາຜູ້ແທນລາສະດອນຄົນໃໝ່ຂອງອາເມລິກາ

ອີງຕາມລາຍງານຂ່າວເມື່ອວັນທີ 7 ມັງກອນ 2023 ໃຫ້ຮູ້ວ່າ: ທ່ານ ເຄວິນ ແມັກຄາທີ ອາຍຸ 57 ປີ ຈາກພັກຣີພັບລີກັນ ໄດ້ຮັບເລືອກໃຫ້ເປັນປະທານສະພາຕ່ຳ ຫຼື ສະພາຜູ້ແທນລາສະດອນອາເມລິກາຄົນໃໝ່ ຫລັງຊະນະການລົງຄະແນນສຽງຮອບທີ 15 ໃນຕອນທ່ຽງວັນທີ 7 ມັງກອນນີ້ ຕາມເວລາປະເທດລາວ.

ໄລຍະ 4 ວັນຜ່ານມາ, ການເມືອງຂອງອາເມລິກາຢູ່ໃນສະພາບບໍ່ຄ່ອຍດີ ເມື່ອບໍ່ມີຜູ້ສະໝັກທ່ານໃດຈາກພັກຣີພັບລີກັນ ແລະ ພັກເດໂມແຄຣດ ໄດ້ຮັບຄະແນນສຽງສ່ວນຫລາຍເຖິງ 218 ຄະແນນສຽງ ຈະພຽງພໍໃຫ້ໄດ້ຮັບໄຊຊະນະໃນການເລືອກປະທານສະພາຕ່ຳອາເມລິກາ ຈຶ່ງເຮັດໃຫ້ຕ້ອງມີການລົງຄະແນນສຽງສູງເຖິງ 15 ຄັ້ງ ຖືເປັນການລົງຄະແນນສຽງເລືອກປະທານສະພາຕ່ຳທີ່ຍາວນານສຸດໃນຮອບ 160 ກວ່າປີຂອງອາເມລິກາ.

ໂດຍໃນການລົງຄະແນນສຽງຄັ້ງທີ 14 ເຊິ່ງມີຂຶ້ນໃນເຊົ້າວັນທີ 7 ມັງກອນນີ້ ໄດ້ເກີດເຫດວຸ້ນວາຍເລັກໜ້ອຍ ເຊິ່ງເວລານັ້ນທ່ານ ເຄວິນ ແມັກຄາທີ ເຫລືອອີກພຽງຄະແນນດຽວຈະສາມາດຂຶ້ນດຳລົງຕຳແໜ່ງປະທານສະພາຕ່ຳໄດ້ສຳເລັດ, ແຕ່ທ່ານ ແມັດ ແກດ ສສ.ຟໍຣິດາ ຂອງພັກຣີພັບລີກັນ ຍັງບໍ່ຍອມລົງຄະແນນສຽງສະໜັບສະໜູນທ່ານ ເຄວິນ ແມັກຄາທີ ຈຶ່ງໃນຕອນນັ້ນທ່ານ ເຄວິນ ແມັກຄາທີ ໄດ້ຕັດສິນໃຈຍ່າງເຂົ້າໄປໂອ້ລົມກັບທ່ານ ແມັດ ແກດ ເພື່ອຂໍໃຫ້ທ່ານຍອມລົງຄະແນນສຽງໃຫ້, ແຕ່



ທ່ານ ແມັດ ແກດ ຍັງຢືນຢັນບໍ່ປ່ຽນໃຈ ຈຶ່ງເຮັດໃຫ້ທ່ານ ໄມໂຣເຈີ ສສ ອີກທ່ານໜຶ່ງຈາກພັກຣີພັບລີກັນ ຍ່າງເຂົ້າໄປຫາທ່ານ ແມັດ ແກດ ກ່ອນຈະມີຄົນດຶງທ່ານເອົາໄວ້.

ເຖິງວ່າທີ່ສຸດແລ້ວທ່ານ ເຄວິນ ແມັກຄາທີ ຈະຊະນະການລົງຄະແນນສຽງຄັ້ງທີ 15 ແຕ່ສິ່ງທີ່ເກີດຂຶ້ນຖືເປັນການສະທ້ອນໜຶ່ງທີ່ເຮັດໃຫ້ອາດຄາດຄະເນໄດ້ວ່າ ການດຳລົງຕຳແໜ່ງຂອງທ່ານຈະປະເຊີນຄວາມຍາກລຳບາກຢ່າງແນ່ນອນ.

**ແຫຼ່ງຂ່າວ: Reuters**




# ນະໂຍບາຍຄຸ້ມຄອງ, ພັດທະນາ ແລະ ດຶງດູດແຮງງານ

ກ່ອນຈະເວົ້າເນື້ອໃນຕົ້ນຕໍ ຂອງບົດນີ້ ຜູ້ຂຽນຂໍອະນຸຍາດປະຊາສຳພັນກັບຜູ້ອ່ານທຸກໆທ່ານວ່າ "ເບິ່ງໄວ້ ໄດ້ບົດຮຽນ" ນີ້ເປັນຄໍລຳເກີດໃໝ່ໃຫຍ່ລຸນປະຈຳໜັງສືພິມ"ຜູ້ແທນປະຊາຊົນ" ລາຍອາທິດທີ່ຫາກໍອອກມາໝາດໆໃໝ່ໆ. ເປັນຄໍລຳນຳສະເໜີບົດຮຽນກ່ຽວກັບການ ຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ, ລະບຽບການນະໂຍບາຍ ກໍຄືແນວທາງຂອງບາງປະເທດ ກໍຄືອົງການຈັດຕັ້ງພາກພື້ນ ແລະ ສາກົນເພື່ອເບິ່ງໄວ້ເປັນບົດຮຽນແລະອາດໝູນໃຊ້ໄດ້ຕາມເງື່ອນໄຂ ແລະ ສະພາບຕົວຈິງຂອງປະເທດເຮົາ. ຄໍລຳນີ້ ມີໃຫ້ອ່ານ 1 ບົດຕໍ່ອາທິດ. ພ້ອມດຽວກັນນັ້ນກໍຂໍການຮ່ວມມືສ່ອງແສງເພື່ອປັບແປງປຸງແຕ່ງຄໍລຳ ນີ້ໃຫ້ມີຄຸນນະພາບດີຂຶ້ນ ຫຼື ຄັກກວ່າ ນັ້ນ ໃຜມີບົດຮຽນດີໆຈາກຕ່າງປະເທດ ກໍສາມາດສະຫຼຸບສັງລວມກັນລົງໃນຄໍລຳນີ້ໄດ້ຜູ້ຂຽນບໍ່ມີຄວາມຕັ້ງໃຈຈະຜູກຂາດຄໍລຳໄວ້ພຽງຜູ້ດຽວ. ຄໍລຳນີ້ ຈະເນັ້ນພາດເນື້ອໃນ ທີ່ເປັນບົດຮຽນຫຼາຍກວ່າຈະເນັ້ນວັນເວລາຂອງຂ່າວເພາະວ່າບົດຮຽນດີໆແຕ່ເກົ່າຢູ່ບາງປະເທດນັ້ນ ກໍຍັງອາດມີຄຸນຄ່າສຳລັບພວກເຮົາທີ່ນຳມາປັບໃຊ້. ໃນບົດທີ່ທ່ານພວມອ່ານຢູ່ນີ້, ຜູ້ຂຽນໄດ້ສັນຫາມາເລົ່າເລື່ອງນະໂຍບາຍກ່ຽວກັບການສົ່ງ ເສີມພັດທະນາ ແລະ ປົກປ້ອງແຮງງານຢູ່ສິງກະໂປ, ມຽນມາ ແລະ ມາເລເຊຍ ໂດຍຂໍເລີ່ມຈາກສິງກະໂປກ່ອນ.

ໃນຕົ້ນປີ 2019 ສະຖາບັນຄຸ້ມຄອງທຸລະກິດເອີຣົບ ໄດ້ສົມທົບກັບກຸ່ມບໍລິສັດ ອາເດັກໂກ (Adecco) ແລະ ກຸ່ມບໍລິສັດ ຕາຕາ (TATA) ຂອງອິນເດຍ ໄດ້ເຜີຍແຜ່ບົດລາຍ ງານການສຳຫຼວດກ່ຽວກັບບັນດາປະເທດທີ່ສາມາດນຳເຂົ້າແຮງງານ ຄຸນນະພາບຈາກຕ່າງປະເທດ. ບົດລາຍງານຊີ້ອອກວ່າ ປະເທດສິງກະ ໂປ ຕິດອັນດັບທີ 2 ຂອງໂລກ ຮອງ ຈາກປະເທດສະວິດເຊີແລນ ແລະ ເປັນທີ 1 ໃນອາຊຽນ. ການສຳຫຼວດນີ້ ເຮັດໃນ 125 ປະເທດ. ເບື້ອງຫຼັງແຫ່ງຄວາມສຳເລັດຂອງສິງກະໂປ ໃນການດຶງດູດແຮງງານລະດັບຊ່ຽວຊານຫືວກະທິ ເຂົ້າໄປຊ່ວຍເປັນກຳລັງແຮງເພື່ອພັດທະນາສິງກະໂປ ທີ່ຈະເລີນຮັ່ງມີຢູ່ ແລະ ໃຫ້ໂຍໆຍິ່ງໆ ຂຶ້ນໄປຕື່ມນັ້ນກໍຄື: ການຕອບແທນຄ່າເມື່ອຍສູງໆ, ການອຳນວຍຄວາມສະດວກໃນການດຳເນີນທຸລະກິດ ແຕ່ ປັດໄຈທີ່ໂດດເດັ່ນທີ່ສຸດກໍຄື: ຄວາມ ໂປ່ງໃສ ໄຮ້ມົນທິນຈາກພະຍາດສໍ້ລາດບັງຫຼວງ, ກົດໝາຍເປັນກົດໝາຍແທ້ ບໍ່ແມ່ນ "ກົດໝູ່". ປັດໄຈ ເຫຼົ່ານີ້ລະ ໄດ້ກາຍເປັນແມ່ເຫຼັກດຶງດູດເອົາຄົນເກັ່ງຈາກຕ່າງປະເທດເຂົ້າໄປເຮັດວຽກຢູ່ສິງກະໂປ.

ທີ່ປະເທດມຽນມາ, ທາງການຂອງປະເທດນີ້ ໃຫ້ຄວາມສົນໃຈເປັນພິເສດ ກ່ຽວກັບລາຍຮັບຂອງກຳມະກອນ ໂດຍໄດ້ມີການສ້າງຕັ້ງຄະນະກຳມະການສະເພາະຂຶ້ນເພື່ອເຮັດໜ້າທີ່ປະສານງານລະຫວ່າງບັນດາ ນາຍຈ້າງ ແລະ ຜູ້ອອກແຮງງານ ເພື່ອກຳນົດຄ່າແຮງງານຂັ້ນຕໍ່າ. ຂ່າວບອກວ່າ ຄ່າແຮງງານຂັ້ນຕ່ຳໃນມຽນມານັ້ນ ປະຕິບັດກັນມາແຕ່ປີ 2015 ໃນອັດຕາ 3.600 ຈາດຕໍ່ຄົນ/ເດືອນ ແລະ ໄດ້ເພີ່ມຂຶ້ນເປັນ 4.800 ຈາດຕໍ່ເດືອນ. ມຽນມາມີກົດໝາຍຄຸ້ມຄອງຄ່າແຮງງານທີ່ປະກາດໃຊ້ມາແຕ່ປີ 2013 ພຸ້ນ. ກົດໝາຍ ໄດ້ກຳນົດໃຫ້ມີການພິຈາ ລະນາຄ່າແຮງງານຂັ້ນຕ່ຳໃນແຕ່ລະ 2 ປີ ໂດຍຜ່ານການປຶກສາຫາ ລື 4 ຝ່າຍຄື: ຕົວແທນນາຍຈ້າງ, ຜູ້ອອກແຮງງານ (ກຳມະກອນ), ເຈົ້າໜ້າທີ່ກ່ຽວຂ້ອງຂອງລັດແລະເຈົ້າໜ້າທີ່ທີ່ຮັບຜິດຊອບເລື່ອງຄ່າແຮງງານໂດຍສະເພາະ.

ສ່ວນຢູ່ປະເທດມາເລເຊຍ, ການອາໄສແຮງງານຈາກຕ່າງປະເທດນັ້ນ ຍັງໜັກໜ່ວງຢູ່ ດັ່ງນັ້ນ ໃນຕົ້ນປີ 2019 ຈຶ່ງມີກະແສຮຽກຮ້ອງໃຫ້ປະຕິຮູບລະບົບນຳເຂົ້າແຮງງານ ຕ່າງປະເທດໃຫ້ມີຄວາມໂປ່ງໃສ ວ່ອງໄວ ບໍ່ອືດອາດຫຍຸ້ງເຫຍີງຄືໃນເມື່ອກ່ອນ. ຢາກເຮັດໄດ້ຄືແນວນີ້ ກໍຕ້ອງລຶບລ້າງລະບົບນາຍໜ້ານຳເຂົ້າແຮງງານເພາະຈະເຮັດໃຫ້ຄ່າໃຊ້ຈ່າຍແພງຂຶ້ນ. ນອກນັ້ນ ຍັງມີການຮຽກຮ້ອງບໍ່ໃຫ້ທາງການອະນຸຍາດໃຫ້ຫຼາຍພາກສ່ວນນຳເຂົ້າແຮງງານຕ່າງປະເທດ, ຄວນສ້າງ ເປັນຈຸດລວມສູນດຽວຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງຊັບພະຍາກອນມະນຸດ.

ໃນໄລຍະຜ່ານມາ ທາງການມາເລເຊຍ ເຄີຍຂໍຮ້ອງບໍ່ໃຫ້ຄົນມາເລເຊຍເລືອກວຽກເຮັດໂພດເກີນໄປ ທັງນີ້ກໍເພື່ອຫຼຸດຜ່ອນການນຳເຂົ້າແຮງງານຕ່າງປະເທດ. ມາເລເຊຍເຄີຍຕັ້ງເປົ້າໝາຍກຸ້ມຕົນເອງດ້ານແຮງງານພາຍໃນປີ 2030.




## ແພງກວ່າສອງທົບ

ທ່ານຍາວ ກັບທ່ານການ ພາກັນໄປຮ້ານ, ແລ້ວສັ່ງກາເຟມາດື່ມ. ພວກ ເຂົາໄດ້ຮັບບໍລິການກາເຟສອງຈອກຢ່າງວ່ອງໄວ. ທ່ານການເລີ່ມດື່ມ. ສ່ວນ ຍາວພັດຍັງລໍຢູ່. ທ່ານຍາວ ແນະນຳບໍ່ໃຫ້ເພື່ອນຂອງເຂົາດື່ມເທື່ອ, ປະໃຫ້ ກາເຟເຢັນລົງກ່ອນ. ທ່ານການເວົ້າຂຶ້ນວ່າ :

"ຫາກໂຕບໍ່ດື່ມໂລດ ມັນຊິເຢັນໃດ !"

"ເຮົາມັກສັ່ງຊັ້ນແລ້ວ, ໂຕຮູ້ບໍ່ ກາເຟເຢັນນັ້ນແພງກວ່າກາເຟຮ້ອນ 2 ເທື່ອພຸ້ນໃດ!"

## Double Cost

Mr Nhao and Mr Kan went to a coffee shop and ordered coffee. Service was prompt and they were served with two cups of coffee. Kan started drinking while Nhao waited. Nhao advised his friend not to drink but to allow it to cool down. Kan said, " It will get cold if you do not drink it right away. " " That is exactly what I want. You know cold coffee costs twice as much. "




ເຮັດແນວອັບປີ ລະວັງຕາຍເປັນຜີກາງທາງ !

● ໂດຍ : ສາວສົ້ນແຕ້ມ

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ :
ທ່ານ ສີງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ :
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວີສັນ ແກ້ວສຸວັນ

ຄະນະບັນນາທິການ :
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

ກອງບັນນາທິການ :
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ຫອມສະນິດ
ນາງ ປາກາລັກ ພົມມີໄຊ

ອອກແບບ - ຈັດໜ້າ :
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ